**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ຄູ່ມື
# ມາດຕະຖານ ຂັ້ນຕອນການປະຕິບັດ ການຄຸ້ມຄອງ ການຍຶດຫຼັກຖານ ອາຊະຍາກຳສັດປ່າ

## ນຳໃຊ້ສຳລັບ ເຈົ້າໜ້າທີ່ປ່າໄມ້


ອົງການພັດທະນາມາດຕະຖານ:
ກົມກວດກາປ່າໄມ້ (ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້)
ຖະໜົນ ຊຸນບູລົມ, ບ້ານທັດສະດີ, ເມືອງຈັນທະບູລີ
ນະຄອນຫຼວງວຽງຈັນ
ເບີໂທລະສັບ: +85621 216508
ເວັບໄຊທ: https://dofi.maf.gov.la


**ນະຄອນຫຼວງວຽງຈັນ, 2024**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ກົມກວດກາປ່າໄມ້

ເລກທີ..0994../ກກປມ

ນະຄອນຫຼວງວຽງຈັນ, ວັນທີ.11.ກໍລະກົດ.2024

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້ ຄູ່ມື ມາດຕະຖານ ຂັ້ນຕອນປະຕິບັດ ການຄຸ້ມຄອງ ການຍຶດຫຼັກຖານ ອາຊະຍາກຳສັດປ່າ

- ກົດໝາຍ ວ່າດ້ວຍດຳເນີນຄະດີອາຍາ (ສະບັບປັບປຸງ) ສະບັບເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
- ກົດໝາຍ ວ່າດ້ວຍສັດປ່າ (ສະບັບປັບປຸງ) ສະບັບເລກທີ 42/ສພຊ, ລົງວັນທີ 17 ກໍລະກົດ 2023;
- ກົດໝາຍ ວ່າດ້ວຍສັດນໍ້າ ແລະ ການປະມົງ ສະບັບເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2023;
- ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມກວດກາປ່າໄມ້ ສະບັບເລກທີ 1504/ກປ, ລົງວັນທີ 22 ເມສາ 2022.

**ຫົວໜ້າກົມກວດກາປ່າໄມ້ ຕົກລົງ:**

**ມາດຕາ 1:** ເຫັນດີຮັບຮອງ ແລະ ປະກາດນຳໃຊ້ ຄູ່ມື ມາດຕະຖານ ຂັ້ນຕອນປະຕິບັດການຄຸ້ມຄອງ ການຍຶດຫຼັກຖານ ອາຊະຍາກຳ ສັດປ່າ ຂອງອີງການສືບສວນ-ສອບສວນ ເຈົ້າໜ້າທີ່ປ່າໄມ້.

**ມາດຕາ 2:** ມອບໃຫ້ເຈົ້າໜ້າທີ່ປ່າໄມ້ ຂັ້ນ ກົມກວດກາປ່າໄມ້, ກອງກວດກາປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ໜ່ວຍງານກວດກາປ່າໄມ້ ເມືອງ, ນະຄອນ ແລະ ຈຸງານກວດກາປ່າໄມ້ຂັ້ນບ້ານ ນຳໃຊ້ຢ່າງເປັນທາງການ.

**ມາດຕາ 3:** ຂໍ້ຕົກລົງ ສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມ**

ກະຊວງກະສິກຳ ແລະ ປ່າໄມ້ ກົມກວດກາປ່າໄມ້

ຄຳພອນ ມູນລະໄນ

# ກົມກວດກາປ່າໄມ້-ການຄຸ້ມຄອງການຍຶດຫຼັກຖານ-ຄູ່ມືມາດຕະຖານ ຂັ້ນຕອນການປະຕິບັດ-001

| | |
|---|---|
| **ນຳໃຊ້ສຳລັບ** | ເຈົ້າໜ້າທີ່ປ່າໄມ້ |
| **ສະບັບທີ** | 1.0 |
| **ວັນທີຈັດພິມ** | |
| **ອະນຸຍາດໂດຍ** | |
| **ຊື່** | |
| **ລາຍເຊັນ** | |

## ຕາຕະລາງຕິດຕາມການດັດແກ້

| **ສະບັບ** | **ປະຫວັດການດັດແກ້** | **ວັນທີອະນຸມັດ** |
|---|---|---|
| 1.0 | ສະບັບຕົ້ນ - ຄູ່ມື ມາດຕະຖານ ຂັ້ນຕອນການປະຕິບັດ ການຄຸ້ມຄອງ ການຍຶດ ຫຼັກຖານອາຊະຍາກຳສັດປ່າ | |
| | | |
| | | |
| | | |
| | | |
| | | |

**ສາລະບານ**

*ພາກທີ I ພາກສະເໜີ*....................................................................................................................1

*1.1 ສະພາບລວມ*.........................................................................................................................1

*1.2 ຈຸດປະສົງ*.............................................................................................................................1

*1.3. ຂອບເຂດການນຳໃຊ້*...............................................................................................................2

*1.4. ນິຕິກຳ ແລະ ເອກະສານແນະນຳ*................................................................................................2

*1.5. ນິຍາມ, ຄຳສັບຫຍໍ້ ແລະ ຊື່ຫຍໍ້*.....................................................................................................2

*ພາກທີ II ຂັ້ນຕອນການຄຸ້ມຄອງ ການຍຶດ ຫຼັກຖານອາຊະຍາກຳສັດປ່າ*..................................................4

*2.1 ການກະກຽມເກັບກຳຫຼັກຖານ*.....................................................................................................4

*2.2 ການສ້າງເລກລະຫັດສະເພາະ ແລະ ວິທີການຖ່າຍຮູບພາບການຍຶດຫຼັກຖານ*..........................................5

*2.3 ການບັນທຶກ ແລະ ການສ້າງເອກະສານ*.........................................................................................12

*2.4 ການເກັບກຳຫຼັກຖານທາງດ້ານວັດຖຸ ແລະ ປະເພດຫຼັກຖານ*.............................................................13

*2.5 ຕ່ອງໂສ້ການຄຸ້ມຄອງຫຼັກຖານ ແລະ ຂັ້ນຕອນການມອບ-ຮັບ*.............................................................19

*ເອກະສານຊ້ອນທ້າຍ ກ*..............................................................................................................20

*ເອກະສານຊ້ອນທ້າຍ ຂ*..............................................................................................................20

*ເອກະສານຊ້ອນທ້າຍ ຄ*..............................................................................................................22

*ເອກະສານຊ້ອນທ້າຍ ງ*..............................................................................................................23

*ເອກະສານຊ້ອນທ້າຍ ຈ*..............................................................................................................24

*ເອກະສານຊ້ອນທ້າຍ ສ*..............................................................................................................25

# ພາກທີ I
# ພາກສະເໜີ

## 1.1 ສະພາບລວມ

ສປປ ລາວ ເປັນປະເທດໜຶ່ງທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ມີເນື້ອທີ່ປ່າໄມ້ ປົກຫຸ້ມຫຼາຍກວ່າ 62 ເປີເຊັນ (ບົດລາຍງານກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 2939/ກປ, ລົງວັນທີ 5 ມິຖຸນາ 2024) ຊຶ່ງເປັນແຫຼ່ງທີ່ຢູ່ອາໄສ ຂອງສັດປ່ານາໆຊະນິດ. ຫຼາຍປີຜ່ານມາ ຊັບພະຍາກອນປ່າໄມ້ ຖືກບຸກລຸກ, ທຳລາຍ ແລະ ນຳໃຊ້ແບບຊະຊາຍ. ໂດຍສະເພາະ ສັດປ່າທີ່ຫາຍາກ ແລະ ໃກ້ຈະສູນພັນ ໄດ້ຖືກລ່າ, ຄ້າຂາຍ ແລະ ບໍລິໂພກແບບຜິດກົດໝາຍ ໂດຍປະຊາຊົນ ພາຍໃນທ້ອງຖິ່ນ ແລະ ກຸ່ມອາຊະຍາກອນ ທີ່ມີການຈັດຕັ້ງຂ້າມຊາດ ຊຶ່ງເປັນສາເຫດໜຶ່ງທີ່ເຮັດໃຫ້ຈຳນວນປະຊາກອນ ແລະ ຄວາມຫຼາກຫຼາຍທາງດ້ານຊະນິດພັນ ຫຼຸດລົງຢ່າງໄວວາ ແລະ ມີຄວາມສ່ຽງທີ່ຈະສູນພັນ ເຊັ່ນ: ເສືອໂຄ່ງ, ປາຂ່າ, ຊ້າງອາຊີ, ລິ່ນ, ເສືອຫຼາ, ນົກກົກ ແລະ ອື່ນໆ. ປະຈຸບັນ ການຄ້າຂາຍສັດປ່າແບບຜິດກົດໝາຍ ຢູ່ພາຍໃນ ແລະ ຂ້າມຊາດ ມີແນວໂນ້ມເພີ່ມຂຶ້ນ ໂດຍຜ່ານຫຼາຍແບບ, ຫຼາຍກົນອຸບາຍ ແລະ ຫຼາຍຮູບການ, ແຕ່ໃນຂະນະດຽວກັນນັ້ນ ການເອົາຜູ້ກະທຳຜິດມາລົງໂທດ ຕາມຂະບວນການຍຸຕິທຳ ຍັງບໍ່ສູງເທົ່າທີ່ຄວນ ເພາະວ່າໃນການດຳເນີນຄະດີ ຕາມຂະບວນການຍຸຕິທຳ, ຫຼັກຖານ ແມ່ນອົງປະກອບສຳຄັນທີ່ສຸດ ສຳລັບການດຳເນີນຄະດີຂອງເຈົ້າໜ້າທີ່ປ່າໄມ້, ອົງການໄອຍະການ ແລະ ສານປະຊາຊົນ. ຖ້າມີຫຼັກຖານ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ກໍ່ຈະເຮັດໃຫ້ການດຳເນີນຄະດີ ມີປະສິດທິພາບສູງຂຶ້ນ. ແນວໃດກໍດີ, ໃນທາງປະຕິບັດຂອງເຈົ້າໜ້າທີ່ປ່າໄມ້ ການເກັບກຳຂໍ້ມູນ ແລະ ຄຸ້ມຄອງຫຼັກຖານ ກ່ຽວກັບ ສັດປ່າ ເພື່ອ ມາປະກອບສຳນວນຄະດີ ສົ່ງໃຫ້ອົງການໄອຍະການ ສັ່ງຟ້ອງຂຶ້ນສານ ຍັງມີສິ່ງທ້າທາຍ ແລະ ຄວາມຫຍຸ້ງຍາກ ຍ້ອນຫຼາຍປັດໄຈ ເຊັ່ນ: ບໍ່ມີຄູ່ມືແນະນຳ, ການຈັດຕັ້ງປະຕິບັດ ຢູ່ຂັ້ນທ້ອງຖິ່ນ ແລະ ສູນກາງ ຍັງບໍ່ເປັນເອກະພາບ, ຄວາມອາດສາມາດ ແລະ ຄວາມຊຳນິຊຳນານ ຂອງເຈົ້າໜ້າທີ່ ຍັງບໍ່ສູງ ແລະ ອື່ນໆ.

ສະນັ້ນ, ຄູ່ມື ມາດຕະຖານ ຂັ້ນຕອນການປະຕິບັດສະເພາະໃນການຄຸ້ມຄອງ ການຍຶດຫຼັກຖານ ອາຊະຍາກຳສັດປ່າ ຈຶ່ງຈຳເປັນຢ່າງຍິ່ງ ສຳລັບເຈົ້າໜ້າທີ່ປ່າໄມ້ ເພື່ອໃຊ້ເປັນເຄື່ອງມື ໃນການຈັດຕັ້ງປະຕິບັດ ໃຫ້ມີຄວາມເປັນເອກະພາບ, ສອດຄ່ອງກັບ ເຕັກນິກວິຊາສະເພາະ, ເປັນລະບົບ ແລະ ຄຸ້ມຄອງໄດ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ໃນຂອບເຂດທົ່ວປະເທດ.

## 1.2 ຈຸດປະສົງ

1) ເພື່ອສະໜັບສະໜູນ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ໃນການຄຸ້ມຄອງ ການຍຶດຫຼັກຖານອາຊະຍາກຳສັດປ່າ;
2) ເພື່ອແນະນຳ ມາດຕະຖານທີ່ຈຳເປັນ ສຳລັບການຍຶດຫຼັກຖານ, ການບັນທຶກ, ການສ້າງເອກະສານ, ການຕິດສະຫຼາກ, ການບັນຈຸຫຸ້ມຫໍ່, ການມອບ - ຮັບ ແລະ ການຄຸ້ມຄອງຫຼັກຖານ ທີ່ເກັບໂຮມໄດ້ ຈາກການຍຶດຫຼັກຖານ ອາຊະຍາກຳສັດປ່າ ໃນການຮັກສາຕ່ອງໂສ້ການຄຸ້ມຄອງຫຼັກຖານ;
3) ເພື່ອຮັບປະກັນ ໃຫ້ຫຼັກຖານທາງດ້ານວັດຖຸທັງໝົດທີ່ມີ ໄດ້ຖືກບັນທຶກ, ຕິດສະຫຼາກ, ເກັບໂຮມ, ບັນຈຸຫຸ້ມຫໍ່ຢ່າງປອດໄພ ແລະ ຍື່ນສະເໜີ ໃຫ້ສາມາດນຳໃຊ້ ຢືນຢັນ ຫຼື ໂຕ້ແຍ້ງສະຖານະການຂອງເຫດການ

ທີ່ຢູ່ ໃນລະຫວ່າງການສືບສວນ-ສອບສວນ. ໃນກໍລະນີສັດມີຊີວິດ ໃຫ້ປ່ອຍຄືນສູ່ທຳມະຊາດຕາມລະບຽບການສະເພາະ.

## 1.3. ຂອບເຂດການນຳໃຊ້

ຄູ່ມື ມາດຕະຖານ ຂັ້ນຕອນການປະຕິບັດ ສະບັບນີ້ ນຳໃຊ້ ສຳລັບເຈົ້າໜ້າທີ່ປ່າໄມ້ ທີ່ໄດ້ຮັບມອບໝາຍຈາກຫົວໜ້າ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ໃຫ້ຈັດຕັ້ງປະຕິບັດໃນການ ເກັບກຳ, ເກັບໂຮມ, ຍຶດ ແລະ ຄຸ້ມຄອງຫຼັກຖານ ແລະ ຜະລິດຕະພັນສັດປ່າ ທີ່ກ່ຽວຂ້ອງກັບອາຊະຍາກຳ.

## 1.4. ນິຕິກຳ ແລະ ເອກະສານແນະນຳ

ຄູ່ມື ມາດຕະຖານຂັ້ນຕອນການປະຕິບັດ ສະບັບນີ້ ຖືກສ້າງຂຶ້ນໂດຍອີງຕາມກົດໝາຍ, ນິຕິກຳ ຂອງ ສປປ ລາວ ແລະ ເອກະສານແນະນຳ ຂອງສາກົນ ດັ່ງນີ້:

- ປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017;
- ກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ (ສະບັບປັບປຸງ) ສະບັບເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
- ກົດໝາຍ ວ່າດ້ວຍສັດປ່າ (ສະບັບປັບປຸງ) ສະບັບເລກທີ 42/ສພຊ, ລົງວັນທີ 17 ກໍລະກົດ 2023;
- ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ກົດໝາຍວ່າດ້ວຍ ສັດນ້ຳ ແລະ ການປະມົງ ສະບັບເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2023;
- ດຳລັດ ວ່າດ້ວຍການຄຸ້ມຄອງ ການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ (CITES) ສະບັບເລກທີ 299/ລບ, ລົງວັນທີ 05 ມິຖຸນາ 2024;
- ຄຳສັ່ງ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ເລກທີ 05, ລົງວັນທີ 08 ພຶດສະພາ 2018;
- ຂໍ້ຕົກລົງ ວ່າດ້ວຍການກວດກາ ແລະ ການດຳເນີນຄະດີ ກ່ຽວກັບຊັບພະຍາກອນປ່າໄມ້ ສະບັບເລກທີ 1858/ກປ, ລົງວັນທີ 24 ມີນາ 2023;
- ຂໍ້ຕົກລົງ ວ່າດ້ວຍອົງການສືບສວນ-ສອບສວນ ເຈົ້າໜ້າທີ່ປ່າໄມ້ ສະບັບເລກທີ 0546/ກປ, ລົງວັນທີ 12 ພຶດສະພາ 2021;
- ຂໍ້ຕົກລົງ ວ່າດ້ວຍການຮັບຮອງເອົາ ບັນຊີ ສັດປ່າ ປະເພດຫວງຫ້າມ ຫຼື ບັນຊີ I, ປະເພດຄຸ້ມຄອງ ຫຼື ບັນຊີ II ແລະ ປະເພດທົ່ວໄປ ຫຼື ບັນຊີ III ເລກທີ 1874/ກປ, ລົງວັນທີ 05 ເມສາ 2024;
- ມາດຕະຖານ ຂອງອົງການຈັດຕັ້ງສາກົນ ກ່ຽວກັບການຮັບຮູ້, ການບັນທຶກ, ການເກັບກຳ, ການຂົນສົ່ງ ແລະ ການເກັບຮັກສາວັດຖຸສິ່ງຂອງ. (ISO 21043-2:2018).

## 1.5. ນິຍາມ, ຄຳສັບຫຍໍ້ ແລະ ຊື່ຫຍໍ້

ຄຳສັບທີ່ນຳໃຊ້ໃນຄູ່ມື ສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ການຄຸ້ມຄອງ** ໝາຍເຖິງ ຂະບວນການດຳເນີນງານ ເກັບຮັກສາ ວັດຖຸສິ່ງຂອງໃດໜຶ່ງຂອງອົງການຈັດຕັ້ງໃດໜຶ່ງ ໃຫ້ບັນລຸເປົ້າໝາຍຢ່າງມີປະສິດທິພາບ ແລະ ປະສິດທິຜົນ;

2. **ການຍຶດ** ໝາຍເຖິງ ການເອົາຊັບສິນ ທີ່ສາມາດເຄື່ອນຍ້າຍໄດ້ ຂອງບຸກຄົນ ຫຼື ນິຕິບຸກຄົນ ຈາກການກະທຳຜິດກົດໝາຍ ໂດຍເຈົ້າໜ້າທີ່ ຂອງອົງການສືບສວນ-ສອບສວນ ເພື່ອດຳເນີນຄະດີ ຕາມກົດໝາຍ;
3. **ຂອງກາງ** ໝາຍເຖິງ ວັດຖຸສິ່ງຂອງ, ຍານພາຫະນະ ຫຼື ອຸປະກອນ ທີ່ຖືກນຳໃຊ້ເຂົ້າໃນການກະທຳຜິດ ຫຼື ທີ່ຈະນຳໃຊ້ເຂົ້າໃນການກະທຳຜິດ;
4. **ຫຼັກຖານ** ໝາຍເຖິງ ວັດຖຸສິ່ງຂອງ ຫຼື ເອກະສານ ທີ່ມີການພົວພັນກັບອາຊະຍາກຳສັດປ່າ ຫຼື ການກະທຳຜິດອື່ນໆ;
5. **ອາຊະຍາກຳສັດປ່າ** ໝາຍເຖິງ ການລ່າ, ຄ້າຂາຍ, ເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ຄອບຄອງ, ຮັບເອົາ, ປຸງແຕ່ງ , ແລະ ບໍລິໂພກ ສັດປ່າ, ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນສັດປ່າ ທີ່ລະເມີດກົດໝາຍ ຂອງ ສປປ ລາວ ໂດຍສະເພາະ ປະມວນກົດໝາຍອາຍາ ແລະ ສົນທິສັນຍາສາກົນ;
6. **ຕ່ອງໂສ້ການຄຸ້ມຄອງຫຼັກຖານ** ໝາຍເຖິງ ບັນຊີທີ່ສາມາດກວດສອບໄດ້ ກ່ຽວກັບ ການເຄື່ອນຍ້າຍ ແລະ ຈຸດ ຕຳແໜ່ງ ຂອງຫຼັກຖານ ນັບແຕ່ເວລາໄດ້ຮັບ ຈົນເຖິງເວລາຖືກສະເໜີໃນທີ່ປະຊຸມສານ;
7. **ຄວາມຕໍ່ເນື່ອງ** ໝາຍເຖິງ ມາດຕະການທີ່ໄດ້ກຳນົດ ເພື່ອຮັບປະກັນໃຫ້ຫຼັກຖານ ທີ່ໄດ້ຜ່ານການວິເຄາະໃນສະພາບເງື່ອນໄຂທາງນິຕິວິທະຍາ ແລະ ໄດ້ສະເໜີໃນທີ່ປະຊຸມສານ ວ່າແມ່ນວັດຖຸສິ່ງຂອງທີ່ແທ້ຈິງທີ່ຖືກຍຶດ ໂດຍເຈົ້າໜ້າທີ່ ທີ່ປະຕິບັດຕົວຈິງ, ໃນເວລາ, ວັນທີ ແລະ ສະຖານທີ່ ຕົວຈິງ. ນີ້ແມ່ນບັນຊີ ທີ່ບັນທຶກກ່ຽວກັບທຸກຄົນ ແລະ ສະຖານທີ່ທຸກບ່ອນ ທີ່ຫຼັກຖານໄດ້ໄປຜ່ານ ຈົນໄປຮອດທີ່ປະຊຸມສານ ຊຶ່ງສາມາດກວດສອບໄດ້ ແລະ ສະແດງໃຫ້ເຫັນຕ່ອງໂສ້ການຄຸ້ມຄອງຫຼັກຖານທີ່ບໍ່ປ່ຽນແປງ;
8. **ສະຖານທີ່ເກີດເຫດ** ໝາຍເຖິງ ສະຖານທີ່ທາງກາຍະພາບໃດໜຶ່ງ ລວມທັງ ບຸກຄົນ, ສັດ, ຍານພາຫະນະ, ອາຄານ, ສະຖານທີ່ ຫຼື ສິ່ງຂອງ ບ່ອນທີ່ອາຊະຍາກຳ ໄດ້ເກີດຂຶ້ນ ຫຼື ຖືກສົງໄສວ່າໄດ້ເກີດຂຶ້ນ ຫຼື ພົວພັນກັບຂໍ້ສົງໄສວ່າເປັນການກະທຳຜິດທາງອາຍາ ແລະ ຫຼັກຖານ ອາດຈະມີຢູ່ໃນສະຖານທີ່ນັ້ນທີ່ສາມາດເປັນປະໂຫຍດແກ່ເຈົ້າໜ້າທີ່ ສືບສວນ-ສອບສວນ;
9. **ສະຫຼາກຫຼັກຖານ** ໝາຍເຖິງ ສະຫຼາກທີ່ພິມໄວ້ລ່ວງໜ້າ ເພື່ອນຳໃຊ້ລະບຸສິ່ງຂອງທີ່ເປັນຫຼັກຖານ ແຕ່ລະລາຍການ ແລະ ປະກອບມີເລກລະຫັດສະເພາະ, ຄຳອະທິບາຍທີ່ກ່ຽວກັບສິ່ງຂອງ, ສະຖານທີ່ບ່ອນທີ່ຫຼັກຖານຖືກເກັບກຳໄດ້, ເວລາ ແລະ ວັນທີ ຂອງການເກັບກຳຫຼັກຖານ ແລະ ຊື່ຂອງບຸກຄົນຜູ້ທີ່ເກັບກຳຫຼັກຖານ. ສະຫຼາກຫຼັກຖານຍັງປະກອບມີພາກຄວາມຕໍ່ເນື່ອງ ເພື່ອບັນທຶກການເຄື່ອນຍ້າຍຂອງຫຼັກຖານ ແລະ ການຮັກສາຕ່ອງໂສ້ການ ຄຸ້ມຄອງຫຼັກຖານ;
10. **ຄວາມສົມບູນ** ໝາຍເຖິງ ຂັ້ນຕອນທີ່ຖືກກຳນົດ ເພື່ອຮັບປະກັນໃຫ້ຫຼັກຖານ ຊຶ່ງຫຼັງຈາກຖືກຍຶດແລ້ວ ຈະບໍ່ສາມາດຖືກປົນເປື້ອນ, ເປ່ເພເສຍຫາຍ ຫຼື ຖືກລົບກວນ ກ່ອນທີ່ມັນຈະຖືກກວດສອບ ໃນຫ້ອງວິເຄາະ ນິຕິວິທະຍາ ຫຼື ໂດຍບຸກຄົນອື່ນໆພາຍໃນຕ່ອງໂສ້ການຄຸ້ມຄອງຫຼັກຖານ;
11. **ຜະລິດຕະພັນສັດປ່າທີ່ບໍ່ກ່ຽວຂ້ອງກັບອາຊະຍາກຳ** ໝາຍເຖິງ ຜະລິດຕະພັນສັດປ່າທີ່ບໍ່ເປັນຫຼັກຖານ ແລະ ບໍ່ກ່ຽວຂ້ອງກັບອາຊະຍາກຳ. ອັນນີ້ອາດຈະແມ່ນຍ້ອນເຫດ ຜົນຂອງການເກັບກຳ ເຊັ່ນ: ການເກັບກຳວັດຖຸ ສິ່ງຂອງ ຫຼັງຈາກການຕາຍຕາມທຳມະຊາດ ຫຼື ການດຳເນີນການຄວບຄຸມສັດທີ່ເປັນບັນຫາ ຫຼື ໃນກໍລະນີສິ່ງຂອງຖືກຮິບເປັນຂອງລັດ ຫຼັງຈາກການສະຫຼຸບຜົນຂອງການສືບສວນ-ສອບສວນ ເພື່ອການບັງຄັບໃຊ້ກົດໝາຍ;

12. **ການຂ້າສັດທີ່ຖືກຄັດເລືອກ** ໝາຍເຖິງ ການຫຼຸດຜ່ອນຈຳນວນປະຊາກອນສັດປ່າ ດ້ວຍການຂ້າແບບເລືອກເຟັ້ນ;
13. **ການເອົາເຂົາຂອງສັດອອກ** ໝາຍເຖິງ ການເອົາເຂົາຂອງສັດໃດໜຶ່ງອອກ ໂດຍເຈດຕະນາ;
14. **ການລ່າເປັນເຫຍື່ອ** ໝາຍເຖິງ ການລ່າສັດໃດໜຶ່ງເພື່ອເປັນເຫຍື່ອ ໂດຍສັດອື່ນ;
15. **ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ** ໝາຍເຖິງ ອຸປະກອນທີ່ສວມໃສ່ ເພື່ອປ້ອງກັນຮ່າງກາຍຂອງບຸກຄົນ ຈາກວັດຖຸ, ສານເຄມີ ແລະ ຄວາມອັນຕະລາຍທາງດ້ານຊີວະພາບ ໃນຂະນະປະຕິບັດງານ;
16. **ເລກລະຫັດສະເພາະ** (URN) ໝາຍເຖິງ ເລກທີ່ກຳນົດໃຫ້ວັດຖຸສິ່ງຂອງທີ່ເປັນຫຼັກຖານ ຢູ່ທີ່ຈຸດຍຶດ/ເກັບກຳ ຊຶ່ງມີລັກສະນະສະເພາະ ເພື່ອບໍ່ໃຫ້ເກີດຄວາມເຂົ້າໃຈຜິດ ກ່ຽວກັບວັດຖຸສິ່ງຂອງທີ່ເປັນຫຼັກຖານອັນອື່ນ.

# ພາກທີ II

# ຂັ້ນຕອນການຄຸ້ມຄອງ ການຍຶດ ຫຼັກຖານອາຊະຍາກຳສັດປ່າ

## 2.1 ການກະກຽມເກັບກຳຫຼັກຖານ

ເຈົ້າໜ້າທີ່ປ່າໄມ້ ຕ້ອງປະເມີນສະຖານະການໃນເບື້ອງຕົ້ນວ່າ ເຫດການດັ່ງກ່າວເປັນອາຊະຍາກຳ ຫຼື ບໍ່ເປັນອາຊະຍາກຳ. ພາຍຫຼັງການປະເມີນສະຖານະການໃນເບື້ອງຕົ້ນແລ້ວ ເຫັນວ່າ ບໍ່ແມ່ນອາຊະຍາກຳສັດປ່າ ເຊັ່ນ: ການຕາຍຂອງສັດປ່າໂດຍທຳມະຊາດ ຫຼື ອຸປະຕິເຫດ, ຕ້ອງເກັບກຳຂໍ້ມູນ ແລະ ລາຍງານໃຫ້ຫົວໜ້າອົງການສືບສວນ-ສອບສວນ ເຈົ້າໜ້າທີ່ປ່າໄມ້ຂັ້ນຂອງຕົນ ເພື່ອຮັບຊາບ. ໃນກໍລະນີ ຫຼັງຈາກປະເມີນສະຖານະການໃນເບື້ອງຕົ້ນແລ້ວເຫັນວ່າ**ເຫດການມີລັກສະນະສົງໄສວ່າເປັນອາຊະຍາກຳສັດປ່າ,** ຄວນປະຕິບັດຕາມຂັ້ນຕອນ ດັ່ງລຸ່ມນີ້:

### 2.1.1 ບຸກຄະລາກອນ

ຄະນະທີມງານທີ່ເຂົ້າຮ່ວມການເກັບກຳຫຼັກຖານ ຕ້ອງປະກອບມີ ຫົວໜ້າທີມ, ຜູ້ປ້ອງກັນການຍຶດຫຼັກຖານຢ່າງໜ້ອຍ 1 ຫຼື 2 ຄົນ ຕາມຄວາມເໝາະສົມ, ຜູ້ເກັບກຳຫຼັກຖານ ຢ່າງໜ້ອຍ 2 ຄົນ, ຜູ້ບັນທຶກ ແລະ ຖ່າຍຮູບພາບຢ່າງໜ້ອຍ 1 ຄົນ. ໃນກໍລະນີຈຳເປັນ, ຄວນມີຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງເຂົ້າຮ່ວມ.

### 2.1.2 ການປ້ອງກັນສະຖານທີເກີດເຫດ

ການປ້ອງກັນຫຼັກຖານ ໃນສະຖານທີ່ເກີດເຫດ ມີຄວາມສຳຄັນເປັນຢ່າງຍິ່ງ ໃນການສືບສວນ-ສອບສວນອາຊະຍາກຳສັດປ່າ ແລະ ຂັ້ນຕອນຕ່າງໆຄວນດຳເນີນຢ່າງລະມັດລະວັງ ເພື່ອປົກປັກຮັກສາຫຼັກຖານ ຈາກການຖືກເປ່ເພເສຍຫາຍ, ການສັບປ່ຽນ ຫຼື ການທຳລາຍ ໂດຍການຈຳກັດ ການເຂົ້າໄປໃນສະຖານທີ່ເກີດເຫດອາຊະຍາກຳເພື່ອສະກັດກັ້ນ ການເຂົ້າໄປໂດຍບໍ່ໄດ້ຮັບອະນຸຍາດ ແລະ ໃນກໍລະນີມີຄວາມຈຳເປັນ ຕ້ອງປ້ອງກັນຫຼັກຖານຈາກສິ່ງທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ຄວນປະຕິບັດ ດັ່ງລຸ່ມນີ້:

- ອີງຕາມສະພາບຕົວຈິງ, ຕ້ອງປັກຫຼັກ, ເບັ່ງສາຍເຊືອກອ້ອມ ສະຖານທີ່ເກີດເຫດ ໂດຍນຳໃຊ້ວິທີການທີ່ເໝາະສົມ ເພື່ອກັ້ນຂອບເຂດທີ່ສາມາດເບິ່ງເຫັນໄດ້.
- ຕ້ອງມີເຈົ້າໜ້າທີ່ ປ້ອງກັນ ເພື່ອບໍ່ໃຫ້ບຸກຄົນທີ່ບໍ່ໄດ້ຮັບອະນຸຍາດ ເຂົ້າ - ອອກ ສະຖານທີ່ເກີດເຫດຢ່າງເດັດຂາດ.
- ແຍກບຸກຄົນຜູ້ທີ່ບໍ່ກ່ຽວຂ້ອງ ອອກຈາກສະຖານທີ່ເກີດເຫດ.

- ບັນທຶກຄຳໃຫ້ການ ຂອງພະຍານທຸກຄົນທີ່ຢູ່ໃນເຫດການ (ເອກະສານຊ້ອນທ້າຍ ກ).
- ບັນທຶກທຸກຂໍ້ມູນທີ່ກ່ຽວຂ້ອງ ກ່ຽວກັບສະຖານະການຂອງການຍຶດຫຼັກຖານ (ເອກະສານຊ້ອນທ້າຍ ຈ).
- ໃນກໍລະນີ ຫຼັກຖານທີ່ເປເພເສຍຫາຍງ່າຍ ເຊັ່ນ: ຍ້ອນສະພາບດິນຟ້າອາກາດຮຸນແຮງ, ການບຸກລຸກຂອງສັດປ່າ ແລະ ອື່ນໆ, ຕ້ອງປົກປັກຮັກສາຫຼັກຖານດັ່ງກ່າວ ໂດຍນຳໃຊ້ຊັບພະຍາກອນທີ່ເໝາະສົມ.
- ໃນກໍລະນີ ຕ້ອງການຄວາມຊ່ວຍເຫຼືອຈາກ ໜ່ວຍງານຊັນນະສູດ ສະຖານທີ່ເກີດເຫດ ຂອງຕຳຫຼວດ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ, ເມື່ອພາກສ່ວນດັ່ງກ່າວມາເຖິງແລ້ວ ເຈົ້າໜ້າທີ່ ຕ້ອງລາຍງານ ທຸກສະພາບ ທີ່ເກັບກຳ ໄດ້ໃນສະຖານທີ່ເກີດເຫດ ໃຫ້ທີມງານຊັນນະສູດຮັບຊາບ ແລ້ວກໍ່ເຮັດໜ້າທີ່ ປ້ອງກັນສະຖານທີ່ເກີດເຫດຕໍ່ໄປ ຈົນກວ່າຈະມີຄຳສັ່ງປະກາດວ່າ ການຊັນນະສູດ ສະຖານທີ່ເກີດເຫດ ໄດ້ສິ້ນສຸດລົງແລ້ວ.
- ໃນກໍລະນີ ມີຜູ້ບາດເຈັບສາຫັດ, ຕ້ອງທຳການຊ່ວຍເຫຼືອຄົນເຈັບດັ່ງກ່າວເສຍກ່ອນ ແລ້ວຈຶ່ງສືບຕໍ່ດຳເນີນການປ້ອງກັນ ແລະ ຮັກສາສະຖານທີ່ເກີດເຫດ.

### 2.1.3 ວິທີການຊອກຄົ້ນຫາຫຼັກຖານ

ໃນໄລຍະການຊັນນະສູດ ສະຖານທີ່ເກີດເຫດ/ການຍຶດຫຼັກຖານ ອາຊະຍາກຳສັດປ່າ, ວິທີການຊອກຄົ້ນຕ່າງໆສາມາດຖືກນຳໃຊ້ ເພື່ອລະບຸຈຸດຕຳແໜ່ງຂອງຫຼັກຖານ ຢູ່ພາຍໃນສະຖານທີ່ເກີດເຫດ. ວິທີການຊອກຄົ້ນຫາຫຼັກຖານ ຂອງເຈົ້າໜ້າທີ່ປ່າໄມ້ ຮັບຮູ້ ແລະ ສາມາດນຳໃຊ້ ດັ່ງນີ້:

- ການຊອກຄົ້ນຢ່າງລະອຽດ ຮອບຄອບ ໂດຍຍ່າງເປັນເສັ້ນຊື່ຮຽງກັນໄປ;
- ການຊອກຄົ້ນຢ່າງລະອຽດ ຮອບຄອບ ໂດຍຍ່າງເປັນເສັ້ນຕາໜ່າງ;
- ການຊອກຄົ້ນໂດຍຍ່າງເປັນວົງວຽນ ເລີ່ມແຕ່ຈຸດຂອບນອກ ຫາຈຸດໃຈກາງ;
- ການຊອກຄົ້ນໂດຍຈັດເປັນເຂດ;
- ການຊອກຄົ້ນໂດຍຈັດເປັນເຂດ ແລະ ຍ່າງເປັນເສັ້ນຕາໜ່າງໃນເຂດ;
- ການຊອກຄົ້ນໂດຍຈັດເປັນຊັ້ນ;
- ການຊອກຄົ້ນຈັດເປັນຊັ້ນ ແລະ ເປັນແຖວຊື່.

  (ເບິ່ງເອກະສານຊ້ອນທ້າຍ ຄ)

## 2.2 ການສ້າງເລກລະຫັດສະເພາະ ແລະ ວິທີການຖ່າຍຮູບພາບການຍຶດຫຼັກຖານ

ການຈັດສັນເລກລະຫັດສະເພາະ (URN) ສຳລັບການຊັນນະສູດ ສະຖານທີ່ເກີດເຫດ/ການຍຶດຫຼັກຖານ ອາຊະຍາກຳສັດປ່າ ແລະ ຫຼັກຖານແຕ່ລະລາຍການທີ່ເກັບກຳ ແມ່ນມີຄວາມສຳຄັນ ຕໍ່ຂະບວນການຕ່ອງໂສ້ການຄຸ້ມຄອງຫຼັກຖານ. ເລກລະຫັດສະເພາະ ທີ່ນຳໃຊ້ໃນການຍຶດຫຼັກຖານ ຈະເຮັດໃຫ້ຮູ້ໄດ້ວ່າ ເປັນການຍຶດຫຼັກຖານສະເພາະ ຢູ່ສະຖານທີ່ສະເພາະ, ໃນວັນທີສະເພາະ ແລະ ເຈົ້າໜ້າທີ່ ພາກສະໜາມທີ່ໄດ້ເກັບກຳວັດຖຸຫຼັກຖານ.

ການຖ່າຍຮູບພາບ ແມ່ນບໍ່ໄດ້ສ້າງຄວາມເສຍຫາຍຫຍັງຕໍ່ຫຼັກຖານ ແລະ ຄວນຖ່າຍຮູບພາບ ທຸກໆຂັ້ນຕອນຂອງການສືບສວນ-ສອບສວນ ການຍຶດຫຼັກຖານ ເຊັ່ນ: ກ່ອນເກັບຫຼັກຖານ, ໃນຊ່ວງໄລຍະການຊັນນະສູດ ແລະ ກ່ອນອອກຈາກສະຖານທີ່ເກີດເຫດ/ບ່ອນຍຶດຫຼັກຖານ.

### 2.2.1 ເລກລະຫັດສະເພາະ

ໃນການເກັບກຳຫຼັກຖານຢູ່ສະຖານທີ່ເກີດເຫດ ວັດຖຸສິ່ງຂອງແຕ່ລະອັນທີ່ເປັນຫຼັກຖານ ຫຼື ເປັນຜະລິດຕະພັນສັດປ່າ ທີ່ບໍ່ກ່ຽວຂ້ອງກັບອາຊະຍາກຳ ຕ້ອງໄດ້ຮັບການຈັດສັນເລກລະຫັດສະເພາະ (URN). ຈຳເປັນຕ້ອງ

ສ້າງເລກລະຫັດສະເພາະ ຢູ່ພາກສະໜາມ ເຊິ່ງມີຄວາມສໍາຄັນທີ່ສຸດ ສໍາລັບການຄຸ້ມຄອງຫຼັກຖານ ແລະ ການກວດສອບຕ່ອງໂສ້ການຄຸ້ມຄອງຫຼັກຖານ. ການສ້າງເລກລະຫັດສະເພາະ ຕ້ອງສອດຄ່ອງກັບຮູບແບບທີ່ໄດ້ຕົກລົງໂດຍເຈົ້າໜ້າທີ່ປ່າໄມ້ ດັ່ງນີ້:

**ວັນທີ**[ຂີດຕໍ່]**ຊື່ຫຍໍ້**[ຂີດຕໍ່]**ສະຖານທີ່**[ຂີດຕໍ່]**ເລກທີ**

- ວັນທີ ເດືອນ ປີ ແມ່ນຂຽນເປັນຮູບແບບ ຫົກຕົວເລກ: ວວດດປປ.
- ຊື່ຫຍໍ້ພາສາອັງກິດ (3 ຕົວອັກສອນ) ແມ່ນຊື່ຂອງເຈົ້າໜ້າທີ່ ຜູ້ເກັບກໍາຫຼັກຖານໃນເບື້ອງຕົ້ນ. ເອົາພະຍາງຂຶ້ນຕົ້ນ ສອງຕົວຂອງຊື່, ແລະ ພະຍາງຂຶ້ນຕົ້ນຂອງນາມສະກຸນ ໜຶ່ງຕົວຂອງນາມສະກຸນ.
- ສະຖານທີ່ເກີດເຫດອາຊະຍາກໍາ ແມ່ນຕ້ອງລະບຸເປັນຕົວອັກສອນພາສາອັງກິດ (A, B, C, ອື່ນໆ) ທີ່ສະແດງເຖິງແຕ່ລະສະຖານທີ່ ທີ່ຕ່າງກັນ ຊຶ່ງເຈົ້າໜ້າທີ່ໄດ້ລົງໄປເກັບກໍາຫຼັກຖານໃນວັນທີດັ່ງກ່າວ.
- ເລກລໍາດັບຂອງແຕ່ລະລາຍການຫຼັກຖານ ທີ່ໄດ້ເກັບກໍາໃນວັນທີ ແລະ ສະຖານທີ່ດັ່ງກ່າວ ໂດຍເຈົ້າໜ້າທີ່ດັ່ງກ່າວ.




ຕົວຢ່າງ: **300323-BOS-A-01** ສະແດງເຖິງ: ວັນທີ 30 ມີນາ 2023, ຊື່ຫຍໍ້ຂອງເຈົ້າໜ້າທີ່ ທີ່ທໍາການຍຶດແມ່ນ (BOS) <u>Bo</u>unlai <u>S</u>oukvilay, ສະຖານທີ່ເກີດເຫດອາຊະຍາກໍາແຫ່ງທໍາອິດໃນວັນດັ່ງກ່າວ (A) ແລະ ຊິ້ນສ່ວນທໍາອິດຂອງຫຼັກຖານທີ່ເກັບກໍາໄດ້ (01).

### 2.2.2 ວິທີການຖ່າຍຮູບພາບພາບ

ການຍຶດຫຼັກຖານທຸກຄັ້ງ ແລະ ຫຼັກຖານທັງໝົດຕ້ອງຖືກຖ່າຍຮູບພາບພາບໄວ້ ຕາມສະພາບທີ່ພົບເຫັນ ແລະ ກ່ອນການເຄື່ອນຍ້າຍ ຫຼື ຍົກຍ້າຍ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

- **ຮູບພາບມູມເບິ່ງກວ້າງ** ຕ້ອງຖ່າຍຮູບພາບເພື່ອສ້າງມູມເບິ່ງ 360 ອົງສາ ຂອງສະຖານທີ່ເກີດເຫດອາຊະຍາກໍາສັດປ່າ (ເບິ່ງຮູບສະແດງ 1).
- **ຮູບພາບມູມເບິ່ງກາງ** ຕ້ອງຖ່າຍຮູບພາບເພື່ອສະແດງໃຫ້ເຫັນສະຖານທີ່ ແລະ ສາຍພົວພັນຂອງແຕ່ລະວັດຖຸ ສິ່ງຂອງທີ່ເປັນຫຼັກຖານ (ເບິ່ງຮູບສະແດງ 5 ແລະ 6).
- **ຮູບພາບມູມເບິ່ງໃກ້** ຕ້ອງຖ່າຍຮູບພາບເພື່ອສະແດງໃຫ້ເຫັນແຕ່ລະວັດຖຸສິ່ງຂອງທີ່ເປັນຫຼັກຖານ ໂດຍບໍ່ມີ ຫຼື ມີຂະໜາດສົມທຽບ ແລະ ຕ້ອງມີສະຫຼາກເລກລະຫັດສະເພາະ (ເບິ່ງຮູບສະແດງ 7).
- **ຮູບພາບມູມເບິ່ງໃກ້ຊິດ** ຕ້ອງຖ່າຍຮູບພາບບ່ອນທີ່ມີເຄື່ອງໝາຍສະເພາະ ຫຼື ຕົວລະບຸ ເທິງຫຼັກຖານແຕ່ລະ ລາຍການ. ການຖ່າຍຮູບພາບນີ້ຈະປະຕິບັດໂດຍ ມີຂະໜາດສົມທຽບ ແລະ ຕ້ອງມີສະຫຼາກເລກລະຫັດສະເພາະ (ເບິ່ງຮູບສະແດງ 8).

- ບໍ່ຄວນນຳໃຊ້ກ້ອງຖ່າຍຮູບພາບ ຫຼື ໂທລະສັບ ທີ່ເປັນຂອງໃຊ້ສ່ວນຕົວເຂົ້າໃນການຖ່າຍຮູບພາບພາບເວລາເກັບກຳຫຼັກຖານ ຫຼື ຂອງກາງ.

**1) ວິທີການຖ່າຍຮູບພາບພາບມູມເບິ່ງກວ້າງ ທີ 1**

ການຖ່າຍຮູບພາບມູມເບິ່ງກວ້າງຢ່າງຮອບດ້ານ ຂອງສະຖານທີ່ເກີດເຫດ ສາມາດປະຕິບັດ ດັ່ງນີ້:

- ຮັບປະກັນໃຫ້ສະຖານທີ່ເກີດເຫດ/ການຍຶດຫຼັກຖານ ປາສະຈາກ ບຸກຄົນ. ບໍ່ໃຫ້ຖ່າຍຮູບພາບ ໂດຍມີ ບຸກຄົນ ຢູ່ໃນສະຖານທີ່ເກີດເຫດ/ການຍຶດຫຼັກຖານ.
- ໃຫ້ເຄື່ອນທີ່ຢ່າງເປັນລະບົບ ຢູ່ອ້ອມຮອບເຂດນອກ ຂອງສະຖານທີ່ເກີດເຫດ/ການຍຶດຫຼັກຖານ ເພື່ອຖ່າຍຮູບພາບທີ່ທັບຊ້ອນກັນ ຈາກແຕ່ລະຕຳແໜ່ງ ໃນລະດັບສາຍຕາຂອງທ່າຢືນ (ຮູບສະແດງ 1).
- ເມື່ອມີສິ່ງກີດຂວາງ, ໃຫ້ຖ່າຍຮູບພາບເພີ່ມຕື່ມ ຈຳນວນຫຼາຍເທົ່າທີ່ຈຳເປັນ ເພື່ອສ້າງໃຫ້ເຫັນມູມພາບໄດ້ 360 ອົງສາ.
- ຖ້າຫາກ ຖ່າຍຮູບພາບໄດ້ຮູບພາບທີ່ມີຄຸນນະພາບຕ່ຳ ຫຼື ຮູບພາບທີ່ຖ່າຍໂດຍບໍ່ຕັ້ງໃຈ, <u>ຮູບພາບດັ່ງກ່າວແມ່ນບໍ່ໃຫ້ລຶບອອກ ເດັດຂາດ.</u>

ຂັ້ນຕອນຖ່າຍຮູບພາບພາບມູມເບິ່ງກວ້າງ ຈະຖືກນຳໃຊ້ ໂດຍບໍ່ຄຳນຶງເຖິງປະເພດສະຖານທີ່ເກີດເຫດ ເຊັ່ນ: ສະຖານທີ່ເກີດເຫດ ອາຊະຍາກຳສັດປ່າ ຢູ່ພາກສະໜາມ, ຍານພາຫະນະ ທີ່ມີຜະລິດຕະພັນສັດປ່າ ທີ່ຜິດກົດໝາຍ, ຕູ້ຄອນເທນເນີຂົນສົ່ງ ທີ່ມີຜະລິດຕະພັນສັດປ່າ ແລະ ອື່ນໆ ທີ່ຜິດກົດໝາຍ.



*ຮູບສະແດງ 1: ຕົວຢ່າງທີ່ສະແດງວິທີການພື້ນຖານ ສຳລັບການຖ່າຍຮູບພາບພາບມູມເບິ່ງກວ້າງ ຂອງຕູ້ຄອນເທນເນີຂົນສົ່ງທີ່ເປີດຢູ່.*

**2) ວິທີການຖ່າຍຮູບພາບພາບມູມເບິ່ງກວ້າງ ທີ 2**

ໃນກໍລະນີທີ່ການຍຶດຫຼັກຖານຂະໜາດໃຫຍ່ ໄດ້ຖືກຍ້າຍອອກຈາກຕູ້ຄອນເທນເນີຂົນສົ່ງ, ຍານພາຫະນະ, ບ່ອນຢູ່ອາໄສ ແລະ ອື່ນໆ ແລະ ຈັດວາງໄວ້ ກ່ອນການເຂົ້າຮ່ວມຂອງເຈົ້າໜ້າທີ່ປ່າໄມ້ ຄວນປະຕິບັດຕາມຂັ້ນຕອນ ດັ່ງນີ້:

- ຮັບປະກັນໃຫ້ສະຖານທີ່ເກີດເຫດ, ການຍຶດຫຼັກຖານ ປາດສະຈາກ ບຸກຄົນ. ບໍ່ໃຫ້ຖ່າຍຮູບພາບ ໂດຍມີບຸກຄົນຢູ່ໃນສະຖານທີ່ເກີດເຫດ ຫຼື ການຍຶດຫຼັກຖານ.
- ໃຫ້ເຄື່ອນທີ່ຢ່າງເປັນລະບົບ ຢູ່ອ້ອມຮອບເຂດນອກ ຂອງສະຖານທີ່ເກີດເຫດ ຫຼື ການຍຶດຫຼັກຖານ ເພື່ອຖ່າຍຮູບພາບພາບທີ່ທັບຊ້ອນກັນ ຈາກແຕ່ລະຕຳແໜ່ງ ໃນລະດັບສາຍຕາຂອງທ່າຢືນ (ຮູບສະແດງ 2).
- ເມື່ອມີສິ່ງກີດຂວາງ, ໃຫ້ຖ່າຍຮູບພາບເພີ່ມຕື່ມ ຈຳນວນຫຼາຍເທົ່າທີ່ຈຳເປັນ ເພື່ອສ້າງໃຫ້ເຫັນມູມພາບໄດ້ 360 ອົງສາ.



*ຮູບສະແດງ 2: ຕົວຢ່າງທີ່ສະແດງວິທີການພື້ນຖານ ສໍາລັບການຖ່າຍຮູບພາບພາບມູມເບິ່ງກວ້າງ ຂອງການຍຶດຫຼັກຖານທີ່ຈັດວາງໄວ້ແທ່ນໄມ້/ແຜ່ນຮອງ.*

- ແຕ່ລະແທ່ນໄມ້ ຫຼື ແຜ່ນຮອງ ຕ້ອງໄດ້ຮັບການຈັດສັນຕົວລະບຸ ໂດຍນໍາໃຊ້ລະບົບຕົວອັກສອນພື້ນຖານ (ຮູບສະແດງ 3) ຫຼື ລະບົບຕົວອັກສອນ-ຕົວເລກ (ຮູບສະແດງ 4) ແລະ ຕ້ອງຖ່າຍຮູບພາບມູມເບິ່ງກວ້າງ ຕື່ມອີກຊຸດໜຶ່ງ.




*ຮູບສະແດງ 3: ຕົວຢ່າງທີ່ສະແດງວິທີການນໍາໃຊ້ລະບົບຕົວອັກສອນພື້ນຖານ ສໍາລັບແຕ່ລະຕົວລະບຸຂອງການຍຶດຫຼັກຖານທີ່ຈັດວາງໄວ້.*




*ຮູບສະແດງ 4: ຕົວຢ່າງສະແດງວິທີການນຳໃຊ້ຕາໜ່າງຕົວໜັງສື-ຕົວເລກພື້ນຖານ ສຳລັບແຕ່ລະຕົວລະບຸຂອງການຍຶດຫຼັກຖານທີ່ຈັດວາງໄວ້.*

- ຖ້າຫາກຖ່າຍຮູບພາບ ໄດ້ຮູບພາບທີ່ມີຄຸນນະພາບຕໍ່າ ຫຼື ຮູບພາບທີ່ຖ່າຍໂດຍບໍ່ຕັ້ງໃຈ, ຮູບພາບດັ່ງກ່າວແມ່ນບໍ່ໃຫ້ລຶບອອກ.

### 3) ວິທີການຖ່າຍຮູບພາບພາບມູມເບິ່ງກາງ

ຮູບພາບມູມເບິ່ງກາງ ຕ້ອງຖ່າຍຮູບພາບ ໂດຍບໍ່ມີເຄື່ອງໝາຍ ຫຼັກຖານ, ຂະໜາດສົມທຽບ ແລະ ສະຫຼາກເລກລະຫັດສະເພາະ (ຮູບສະແດງ 5) ແລະ ຫຼັງຈາກນັ້ນ, ຈຶ່ງຖ່າຍຮູບພາບພາບ ໂດຍມີເຄື່ອງໝາຍ ຫຼັກຖານ, ຂະໜາດສົມທຽບ ແລະ ສະຫຼາກເລກລະຫັດສະເພາະ (ຮູບສະແດງ 6) ເພື່ອເນັ້ນໃສ່ສະຖານທີ່ ແລະ ລະບຸແຕ່ລະວັດຖຸສິ່ງຂອງທີ່ເປັນຫຼັກຖານ.

**ໝາຍເຫດ**: ກໍລະນີ ນີ້ມີຄວາມສຳຄັນເປັນພິເສດເພື່ອໃຊ້ເປັນຕົວຢ່າງຂອງການຍຶດຫຼັກຖານ ຂະໜາດໃຫຍ່.




*ຮູບສະແດງ 5: ຕົວຢ່າງທີ່ສະແດງຮູບພາບມູມເບິ່ງກາງ ຂອງວັດຖຸສິ່ງຂອງທີ່ຈັດວາງໄວ້ຢູ່ A1.*




*ຮູບສະແດງ 6: ຕົວຢ່າງທີ່ສະແດງຮູບພາບມູມເບິ່ງກາງ ຂອງວັດຖຸສິ່ງຂອງທີ່ຈັດວາງໄວ້ຢູ່ A1 ທີ່ມີເຄື່ອງໝາຍຫຼັກຖານ, ຂະໜາດສົມທຽບ ແລະ ເລກລະຫັດສະເພາະ.*

### 4) ວິທີການຖ່າຍຮູບພາບພາບມູມເບິ່ງໃກ້

ຮູບພາບມູມເບິ່ງໃກ້ ຕ້ອງຖ່າຍຮູບພາບຂອງແຕ່ລະວັດຖຸສິ່ງຂອງທີ່ເປັນຫຼັກຖານ ທີ່ຖືກຍຶດ ແລະ/ຫຼື ເປັນຕົວຢ່າງ ໂດຍບໍ່ມີ ຫຼື ມີສະຫຼາກເລກລະຫັດສະເພາະ ແລະ ເຄື່ອງມືວັດແທກ.

- ປັບຮູບແບບກ້ອງຖ່າຍຮູບພາບ ຕາມຄວາມຕ້ອງການ ເຊັ່ນ: ຖ່າຍຮູບພາບທາງຕັ້ງ ຫຼື ຖ່າຍຮູບພາບທາງຂວາງ.
- ຮັບປະກັນ ການຖືກ້ອງຖ່າຍຮູບພາບ ໃຫ້ຢູ່ໃນລະດັບທີ່ຂະໜານກັບວັດຖຸສິ່ງຂອງທີ່ຈະຖ່າຍຮູບພາບ.
- ເຄື່ອນຍ້າຍກ້ອງຖ່າຍຮູບພາບ ເຂົ້າຫາຫຼັກຖານ ຈົນກວ່າຈະມີຂະໜາດໃຫຍ່ທີ່ສຸດ ໃນຊ່ອງເບິ່ງພາບຂອງກ້ອງຖ່າຍຮູບພາບ (ຮູບສະແດງ 7).
- ຮັບປະກັນ ໃຫ້ເລກລະຫັດສະເພາະ ແລະ ຂະໜາດສົມທຽບ ສາມາດເບິ່ງເຫັນ ແລະ ອ່ານໄດ້ໃນຮູບພາບ
- ຖ່າຍຮູບພາບ ແຕ່ລະຂ້າງ/ດ້ານໜ້າ ຂອງວັດຖຸສິ່ງຂອງ.



*ຮູບສະແດງ 7: ຕົວຢ່າງທີ່ສະແດງຊ່ອງເບິ່ງພາບຂອງກ້ອງຖ່າຍຮູບພາບທີ່ຈຳລອງ ສະແດງວິທີການຖ່າຍຮູບພາບພາບມູມເບິ່ງໃກ້ ທີ່ບໍ່ດີ ແລະ ດີ.*

**ໝາຍເຫດ:** ໃນກໍລະນີ ບໍ່ມີບັນທັດຂະໜາດສົມທຽບ, ສິ່ງຂອງທີ່ຜະລິດເປັນຂະໜາດມາດຕະຖານ ກໍ່ສາມາດນຳໃຊ້ໄດ້ ເຊັ່ນ: ຫຼຽນ, ປອກກະສູນປືນ ແລະ ອື່ນໆ ສາມາດຖືກນຳໃຊ້ເປັນສິ່ງປ່ຽນແທນຂະໜາດສົມທຽບໄດ້.

### 5) ວິທີການຖ່າຍຮູບພາບມູມເບິ່ງໃກ້ຊິດ

ຜະລິດຕະພັນສັດປ່າ ທີ່ມີເຄື່ອງໝາຍສະເພາະ ຫຼື ລັກສະນະສະເພາະ ເຊັ່ນ: ຮອຍຂຽນ, ຮອຍຕັດ, ຮອຍນິ້ວມື ທີ່ສາມາດເບິ່ງເຫັນໄດ້ ຫຼື ໃນກໍລະນີ ທີ່ຕົວຢ່າງຈະຕ້ອງເອົາອອກຈາກວັດຖຸໃດໜຶ່ງ, ຕ້ອງໄດ້ຖ່າຍຮູບພາບມູມເບິ່ງໃກ້ຊິດ.

ຮູບພາບມູມເບິ່ງໃກ້ຊິດ ຕ້ອງຖ່າຍຮູບພາບ ໂດຍມີສະຫຼາກເລກລະຫັດສະເພາະ ແລະ ຂະໜາດສົມທຽບ ໂດຍນໍາໃຊ້ຂັ້ນຕອນ ດັ່ງນີ້:

- ປັບຮູບແບບກ້ອງຖ່າຍຮູບພາບ ຕາມຄວາມຕ້ອງການ ເຊັ່ນ: ຖ່າຍຮູບພາບທາງຕັ້ງ ຫຼື ຖ່າຍຮູບພາບທາງຂວາງ.
- ຮັບປະກັນການຖືກ້ອງຖ່າຍຮູບພາບ ໃຫ້ຢູ່ໃນລະດັບທີ່ຂະໜານກັບວັດຖຸສິ່ງຂອງທີ່ຈະຖ່າຍຮູບພາບ.
- ໃນກໍລະນີ ມີຄວາມຈໍາເປັນ, ນໍາໃຊ້ສະຫຼາກເລກລະຫັດສະເພາະຂະໜາດນ້ອຍ ເພື່ອເນັ້ນໃສ່ພື້ນທີ່ທີ່ມີຄວາມສົນໃຈສະເພາະ.
- ເຄື່ອນກ້ອງຖ່າຍຮູບພາບ ເຂົ້າຫາຫຼັກຖານຈົນກວ່າຈະມີຂະໜາດໃຫຍ່ທີ່ສຸດ ໃນຊ່ອງເບິ່ງພາບຂອງກ້ອງຖ່າຍຮູບພາບ (ຮູບສະແດງ 8).
- ຮັບປະກັນໃຫ້ພື້ນທີ່ ທີ່ມີຄວາມສົນໃຈ, ເລກລະຫັດສະເພາະ ແລະ ຂະໜາດສົມທຽບ ສາມາດເບິ່ງເຫັນ ແລະ ອ່ານໄດ້ໃນຮູບພາບ.

**ໝາຍເຫດ:** ໃນກໍລະນີ ທີ່ຕ້ອງເອົາຕົວຢ່າງອອກຈາກວັດຖຸສິ່ງຂອງໃດໜຶ່ງ, ຕ້ອງຖ່າຍຮູບພາບ ກ່ອນ ແລະ ຫຼັງ ການເອົາຕົວຢ່າງອອກ ໂດຍນໍາໃຊ້ຂັ້ນຕອນອັນດຽວກັນກັບທີ່ໄດ້ລະບຸໄວ້ຢູ່ຂ້າງເທິງນັ້ນ.




*ຮູບສະແດງ 8: ຕົວຢ່າງທີ່ສະແດງຮູບພາບມູມເບິ່ງໃກ້ ແລະ ຮູບພາບມູມເບິ່ງໃກ້ຊິດ ຂອງພື້ນທີ່ທີ່ມີຄວາມສົນໃຈ ບົນຫຼັກຖານທີ່ເກັບກໍາໄດ້.*

**ໝາຍເຫດ**: ຄວນຖ່າຍຮູບພາບການວິເຄາະ ຕາມລໍາດັບຂັ້ນຕອນທັງໝົດ ເພື່ອໃຫ້ສາມາດເຫັນພາບຂອງຂະບວນການວິເຄາະໄດ້.

### 6) ການແຕ້ມຮູບສະເກັດ (ແຜນວາດ)

ການແຕ້ມຮູບສະເກັດຂອງສະຖານທີ່ເກີດເຫດ ມີຄວາມສໍາຄັນຕໍ່ການສັນນິຖານ ລັກສະນະເຫດການ ທີ່ເກີດຂຶ້ນ ແລະ ການພົວພັນຮ່ອງຮອຍຫຼັກຖານ ກັບຜູ້ກະທໍາຜິດ ຫຼື ການນໍາເອົາຜູ້ກະທໍາຜິດ ລົງໄປຈໍາລອງເຫດການຄືນ. ມາດຕະຖານຂັ້ນພື້ນຖານ ຂອງຂໍ້ມູນທີ່ປະກອບໃນຮູບແຕ້ມສະເກັດ ມີດັ່ງນີ້:

- ຫົວຂໍ້;
- ເລກລະຫັດສະເພາະ;
- ເຄື່ອງໝາຍ (ສໍາລັບເຄື່ອງໝາຍ ແລະ ຄໍາສັບຫຍໍ້);
- ເຂັມທິດຊີ້ທິດເໜືອ;
- ມາດຕາສ່ວນ - ບອກມາດຕາສ່ວນທີ່ນໍາໃຊ້ຖ້າຫາກແຕ້ມຕາມມາດຕາສ່ວນ ຫຼື ລະບຸ " ບໍ່ມີມາດຕາສ່ວນ ";
- ປະເພດອາຊະຍາກໍາ / ການກະທໍາຜິດ (ຖ້າມີ);
- ສະຖານທີ່;
- ວັນທີ;
- ເວລາເລີ່ມຕົ້ນ & ເວລາສໍາເລັດ;
- ຊື່ / ຊັ້ນຕໍາແໜ່ງ / ຈໍານວນ ຂອງບຸກຄົນທີ່ສ້າງຮູບແຕ້ມສະເກັດ;
- ລາຍລະອຽດຂອງເຈົ້າໜ້າທີ່ ທີ່ເປັນພະຍານ (ຖ້າມີ).

## 2.3 ການບັນທຶກ ແລະ ການສ້າງເອກະສານ

ເຈົ້າໜ້າທີ່ປ່າໄມ້ ຕ້ອງບັນທຶກຂໍ້ມູນຫຼັກຖານ ທີ່ພົບເຫັນໃນສະຖານທີ່ເກີດເຫດ/ການຍຶດຫຼັກຖານ ອາຊະຍາກໍາສັດປ່າ ຢ່າງລະອຽດ ຕາມແບບຟອມທີ່ໄດ້ກໍານົດໃຫ້ ຄື ແບບຟອມສະຫຼາກຫຼັກຖານ, ແບບຟອມບົດບັນທຶກກວດກາພາກສະໜາມ, ແບບຟອມບົດບັນທຶກຄໍາໃຫ້ການ (ເບິ່ງເອກະສານຊ້ອນທ້າຍ ກ, ຂ, ງ, ຈ, ສ ) ທີ່ປະກອບມີຂໍ້ມູນ ດັ່ງນີ້:

- ເວລາ ແລະ ວັນທີຂອງການຍຶດ.
- ສະຖານທີ່ຂອງການຍຶດ.
- ເລກລະຫັດສະເພາະ ທີ່ໄດ້ຈັດສັນໃຫ້ແຕ່ລະລາຍການວັດຖຸຫຼັກຖານ.
- ຄໍາອະທິບາຍວັດຖຸຫຼັກຖານ.
- ລາຍລະອຽດ ກ່ຽວກັບເຈົ້າຂອງ ຫຼື ຜູ້ຖືກສົງໄສ.
- ລາຍລະອຽດ ກ່ຽວກັບພະຍານ.
- ມາດຕະການປ້ອງກັນທີ່ນໍາໃຊ້ ເພື່ອຫຼຸດຜ່ອນຄວາມສ່ຽງຂອງການປົນເປື້ອນ.

### 2.3.1 ສະຫຼາກຫຼັກຖານ

ເຈົ້າໜ້າທີ່ປ່າໄມ້ ທີ່ທໍາການຍຶດຫຼັກຖານ ຕ້ອງຂຽນປະກອບສະຫຼາກເລກລະຫັດສະເພາະ ຢ່າງຄົບຖ້ວນ ແລະ ຖືກຕ້ອງຊັດເຈນ ກ່ອນຄັດຕິດໃສ່ຫຼັກຖານ ຫຼື ເອົາຫຼັກຖານວາງໃສ່ໃນຖົງທີ່ມີສະຫຼາກທີ່ພິມໄວ້ (ເບິ່ງເອກະສານຊ້ອນທ້າຍ ງ ) ສໍາລັບຕົວຢ່າງສະຫຼາກຫຼັກຖານ ທີ່ໄດ້ຂຽນປະກອບຢ່າງຄົບຖ້ວນ. ແຕ່ລະສະຫຼາກຫຼັກຖານ ຕ້ອງປະກອບມີຂໍ້ມູນ ດັ່ງນີ້:

- ເລກລະຫັດສະເພາະ.
- ຄໍາອະທິບາຍ ກ່ຽວກັບຫຼັກຖານ.
- ສະຖານທີ່ ບ່ອນທີ່ຫຼັກຖານຖືກພົບເຫັນ/ຍຶດ.
- ຊື່ເຈົ້າໜ້າທີ່ ທີ່ທໍາການຍຶດ.
- ລາຍເຊັນເຈົ້າໜ້າທີ່ ທີ່ທໍາການຍຶດ.

- ວັນທີ ແລະ ເວລາຂອງການຍຶດ.

ໃນກໍລະນີ ບໍ່ມີສະຫຼາກຫຼັກຖານແບບມັດຕິດ ຫຼື ຖົງໃສ່ຫຼັກຖານທີ່ພິມໄວ້ກ່ອນ, ຕ້ອງຂຽນຂໍ້ມູນທີ່ລະບຸຢູ່ຂ້າງເທິງນີ້ ໃສ່ດ້ານໜ້າເບື້ອງນອກຂອງເຄື່ອງຫຸ້ມຫໍ່ທີ່ມີ.

ເພື່ອຫຼີກລ້ຽງຄວາມສ່ຽງ ຕໍ່ຄວາມເສຍຫາຍ, ການປ່ຽນແປງ ຫຼື ການທຳລາຍຫຼັກຖານ, ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

- ໃນເວລາໃດກໍຕາມ, ຕ້ອງບໍ່ຂຽນຂໍ້ມູນຂ່າວສານໃສ່ຫຼັກຖານໂດຍກົງ.
- ຕ້ອງຂຽນຂໍ້ມູນຄົບຖ້ວນໃຫ້ສຳເລັດ ກ່ອນເອົາຫຼັກຖານເຂົ້າໃສ່ໃນເຄື່ອງຫຸ້ມຫໍ່.
- ຫຼັກຖານຕ້ອງຖືກ ຂົນຍ້າຍ ແລະ ບັນຈຸຫຸ້ມຫໍ່ ດ້ວຍວິທີທີ່ມີຄວາມສ່ຽງໜ້ອຍທີ່ສຸດ ໃນການສ້າງຄວາມເສຍຫາຍ, ສັບປ່ຽນ ຫຼື ທຳລາຍວັດຖຸຮ່ອງຮອຍທາງນິຕິວິທະຍາ ເຊັ່ນ: ຮອຍນິ້ວມື, DNA ແລະ ອື່ນໆ.
- ຕ້ອງຖືເຄື່ອງຫຸ້ມຫໍ່ ໄປຫາຫຼັກຖານຢູ່ສະເໝີ ແລະ ບໍ່ໃຫ້ເຮັດທາງປີ້ນ. (ບໍ່ໃຫ້ຍ້າຍຫຼັກຖານໄປຫາ ເຄື່ອງຫຸ້ມຫໍ່)
- ໃນກໍລະນີ ທີ່ມີຊັບສິນ ຫຼື ວັດຖຸທີ່ມີຄ່າ ເຊັ່ນ: ເງິນສົດ, ຄຳ, ເຄື່ອງປະດັບ ແລະ ອື່ນໆ, ສິ່ງຂອງດັ່ງກ່າວຕ້ອງຖືກຈັດສັນເລກລະຫັດສະເພາະ, ຕິດສະຫຼາກ ແລະ ຫຸ້ມຫໍ່ ກ່ອນນຳໄປເກັບມ້ຽນຢູ່ບ່ອນທີ່ປອດໄພ (ຫ້ອງການ ຂອງ ກົມກວດກາປ່າໄມ້ ຫຼື ກອງກວດກາປ່າໄມ້) ໂດຍຊ້ອງໜ້າພະຍານ ຢ່າງໜ້ອຍສອງຄົນ (ຕ່ອງໂສ້ການຄຸ້ມຄອງຫຼັກຖານ). ຫຼັງຈາກໄດ້ຖ່າຍຮູບພາບ ແລະ ບັນທຶກ ສະຖານທີ່ ແລະ ສະພາບແລ້ວ.

ທຸກຜະລິດຕະພັນສັດປ່າ ທີ່ບໍ່ກ່ຽວຂ້ອງກັບອາຊະຍາກຳ, ດີທີ່ສຸດ ແມ່ນຕ້ອງຖ່າຍຮູບພາບ, ເຮັດເອກະສານ ແລະ ຫຸ້ມຫໍ່ ໂດຍນຳໃຊ້ວິທີດຽວກັນກັບທີ່ໄດ້ອະທິບາຍ ສຳລັບຫຼັກຖານ, ແຕ່ການຕັດສິນໃຈວ່າ ຈະຫຸ້ມຫໍ່ ຫຼື ບໍ່ຫຸ້ມຫໍ່ ວັດຖຸທີ່ບໍ່ກ່ຽວຂ້ອງກັບອາຊະຍາກຳ ແມ່ນເຈົ້າໜ້າທີ່ ຜູ້ເກັບກຳຫຼັກຖານ ເປັນຜູ້ພິຈາລະນາ ຕົກລົງ.

## 2.4 ການເກັບກຳຫຼັກຖານທາງດ້ານວັດຖຸ ແລະ ປະເພດຫຼັກຖານ

ຫຼັງຈາກການຊອກຄົ້ນຫາ, ບັນທຶກ, ສ້າງເອກະສານ ຂອງຫຼັກຖານຈາກສະຖານທີ່ເກີດເຫດ/ການຍຶດຫຼັກຖານ ອາຊະຍາກຳສັດປ່າ, ຫຼັກຖານທັງໝົດທີ່ຈຳເປັນ ສຳລັບການວິເຄາະເພີ່ມຕື່ມ ແລະ ເພື່ອຊ່ວຍໃນການສືບສວນ-ສອບສວນ ຈະຕ້ອງຖືກເກັບກຳ. ປະເພດຫຼັກຖານທີ່ສາມາດພົບເຫັນ ໃນສະຖານທີ່ເກີດເຫດ/ການຍຶດຫຼັກຖານ ອາຊະຍາກຳສັດປ່າ ອາດຈະແຕກຕ່າງກັນໄປ ແລະ ບໍ່ຈຳກັດສະເພາະແຕ່ຕົວຢ່າງ.

ການເກັບກຳຫຼັກຖານ ທີ່ເປັນ ສັດປ່າທີ່ມີຊີວິດ, ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ, ອາວຸດປືນ ແລະ ຫຼັກຖານປະເພດອື່ນໆ ເຈົ້າໜ້າທີ່ ຜູ້ຈະດຳເນີນຕ້ອງປະຕິບັດ ດັ່ງນີ້:

### 2.4.1 ສັດປ່າທີ່ມີຊີວິດ

- ບຸກຄະລາກອນ ຕ້ອງສວມໃສ່ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນທີ່ເໝາະສົມ ສຳລັບເຫດການທີ່ເຂົ້າຮ່ວມ ເຊັ່ນ: ລະດັບມາດຕະຖານຂັ້ນພື້ນຖານ ຂອງອຸປະກອນປ້ອງກັນຄວາມປອດໄພ ສ່ວນບຸກຄົນ ແມ່ນຖົງມືກັນພະຍາດ 2 ຄູ່ ແລະ ຜ້າອັດປາກ-ດັງ;
- ການສວມໃສ່ອຸປະກອນປ້ອງກັນຕົນເອງຂັ້ນພື້ນຖານ ຕ້ອງໃສ່ຜ້າອັດປາກກ່ອນ ຫຼັງຈາກນັ້ນ ໃສ່ຖົງມືສອງຊັ້ນຊ້ອນກັນ ຮັບປະກັນບໍ່ໃຫ້ຖົງມືຈີກຂາດ. ຖ້າຂາດ ຕ້ອງປ່ຽນໃສ່ຖົງມືໂຕໃໝ່;
- ຕ້ອງໄດ້ຜ່ານການຝຶກອົບຮົມ ຫຼື ມີປະສົບການ ກ່ຽວກັບເຕັກນິກການກູ້ໄພສັດປ່າ, ການຊ່ວຍເຫຼືອສັດປ່າ, ການເກັບຕົວຢ່າງພະຍາດສັດປ່າ ແລະ ອື່ນໆ. ໃນກໍລະນີຈຳເປັນ, ຕ້ອງຂໍຄວາມຊ່ວຍເຫຼືອຈາກຜູ້ຊ່ຳນານງານຂອງພາກສ່ວນທີ່ກ່ຽວຂ້ອງ;

- ຕ້ອງສັງເກດເບິ່ງວ່າ ເປັນສັດຮ້າຍ, ມີພິດຮ້າຍແຮງ, ເຈັບປ່ວຍ ຫຼື ສົງໄສວ່າຕິດເຊື້ອພະຍາດ ແລະ ມີຄວາມຈຳເປັນຕ້ອງຂໍຄວາມຊ່ວຍເຫຼືອ ຈາກຜູ້ຊ່ຽວຊານສະເພາະດ້ານ;
- ຖ່າຍຮູບພາບ ຫຼື ຖ່າຍວີດີໂອ ຈຸດເກີດເຫດ ແລະ ບໍລິເວນອ້ອມຂ້າງ ກ່ອນລົງມືເກັບກຳຫຼັກຖານ (ວິທີຖ່າຍຮູບພາບ ໃຫ້ປະຕິບັດຕາມ ຂໍ້ 2.2.2 );
- ຈັດສັນເລກລະຫັດສະເພາະ ໃຫ້ຫຼັກຖານແຕ່ລະອັນ ແລະ ບັນທຶກຂໍ້ມູນລະອຽດ (ເບິ່ງເອກະສານຊ້ອນທ້າຍ ໆ ) ໂດຍນຳໃຊ້ວິທີການບັນທຶກ ໃນຂໍ້ 2.2.1;
- ຕິດສະຫຼາກຫຼັກຖານ ລວມທັງ ເລກລະຫັດສະເພາະ ໃສ່ຖົງ ຫຼື ກົງຂັງ ທີ່ບັນຈຸ ຫຼື ຂັງສັດ ຕາມຄວາມເໝາະສົມ;
- ຖ່າຍຮູບພາບ ຫຼື ຖ່າຍວີດີໂອ ທີ່ສະແດງເລກລະຫັດສະເພາະ ທີ່ຈັດສັນໃຫ້ສັດປ່າທີ່ມີຊີວິດ ແຕ່ລະໂຕ ຫຼື ກົງຂັງທີ່ບັນຈຸສັດປ່າຫຼາຍໂຕ (ວິທີຖ່າຍຮູບພາບ ໃຫ້ປະຕິບັດຕາມ ຂໍ້ 2.2.2);
- ໃນກໍລະນີມີຄວາມຈຳເປັນ ເກັບຕົວຢ່າງຈາກສັດປ່າ ທີ່ສົງໄສວ່າຕິດພະຍາດ, ຕ້ອງຕິດຕໍ່ພົວພັນກັບ ກົມລ້ຽງສັດ ແລະ ການປະມົງ, ກະຊວງ ກະຊວງ ກະສິກຳ ແລະ ປ່າໄມ້;
- ໃນກໍລະນີ ຈຳເປັນມີການຢັ້ງຢືນແຫຼ່ງທີ່ມາ ຫຼື ຈຳແນກຊະນິດພັນສັດປ່າ ໂດຍການພິສູດແຫຼ່ງກຳມະພັນ (DNA), ຕ້ອງຕິດຕໍ່ພົວພັນ ຫາ ກົມກວດກາປ່າໄມ້ ເພື່ອແຈ້ງໃຫ້ ໜ່ວຍງານວິທະຍາສາດ ໄຊເຕັດ (CITES SA) ຮັບຊາບ ເຖິງຄວາມຈຳເປັນຕ້ອງເກັບກຳຕົວຢ່າງ ເພື່ອທຳການພິສູດໂດຍຜູ້ຊ່ຽວຊານສະເພາະດ້ານກຳມະພັນ (DNA);
- ຄວນແຍກຊະນິດພັນສັດປ່າ ທີ່ຕ່າງກັນອອກຈາກກັນ ຖ້າເປັນໄປໄດ້. ໃນກໍລະນີ ຕ້ອງການຄວາມຊ່ວຍເຫຼືອ ດ້ານເຕັກນິກສະເພາະ, ຄວນຕິດຕໍ່ພົວພັນກັບ ອົງການຈັດຕັ້ງ ທີ່ມີເງື່ອນໄຂທາງຊັບພະຍາກອນ ໂດຍສະເພາະແມ່ນ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (NGOs).

### 2.4.2 ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ

#### 1) ຊາກ ແລະ ຊິ້ນສ່ວນສັດປ່າ

- ບຸກຄະລາກອນ ຕ້ອງສວມໃສ່ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ທີ່ເໝາະສົມ ສຳລັບເຫດການທີ່ເຂົ້າຮ່ວມ ເຊັ່ນ: ລະດັບມາດຕະຖານຂັ້ນພື້ນຖານຂອງອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ແມ່ນຖົງມືກັນພະຍາດ 2 ຄູ່ ແລະ ຜ້າອັດປາກ-ດັງ;
- ການສວມໃສ່ອຸປະກອນປ້ອງກັນຕົນເອງຂັ້ນພື້ນຖານ ຕ້ອງ ໃສ່ຜ້າອັດປາກກ່ອນ ຫຼັງຈາກນັ້ນ ໃສ່ຖົງມືສອງຊັ້ນຊ້ອນກັນ ຮັບປະກັນບໍ່ໃຫ້ຖົງມືຈີກຂາດ. ຖ້າຂາດ ຕ້ອງປ່ຽນໃສ່ຖົງມືໂຕໃໝ່;
- ຖ່າຍຮູບພາບ ຫຼື ຖ່າຍວີດີໂອ ຈຸດເກີດເຫດ ແລະ ບໍລິເວນອ້ອມຂ້າງ ກ່ອນລົງມືເກັບກຳຫຼັກຖານ (ວິທີຖ່າຍຮູບພາບ ໃຫ້ປະຕິບັດຕາມ ຂໍ້ 2.2.2);
- ຈັດສັນເລກລະຫັດສະເພາະໃຫ້ຫຼັກຖານແຕ່ລະອັນ ແລະ ບັນທຶກຂໍ້ມູນລະອຽດ (ເບິ່ງເອກະສານຊ້ອນທ້າຍ ໆ ) ໂດຍນຳໃຊ້ວິທີການບັນທຶກ ໃນ ຂໍ້ 2.2.1;
- ໃຫ້ສັງເກດເບິ່ງສາເຫດການຕາຍຂອງສັດປ່າ ວ່າແມ່ນການຕາຍຜິດທຳມະຊາດ ຫຼື ການຕາຍແບບບໍ່ຮູ້ສາເຫດ ຫຼື ອາດຕາຍຍ້ອນພະຍາດ ເຊັ່ນ: ຕາຍເປັນຈຳນວນຫຼາຍ ໃນໄລຍະເວລາສັ້ນ, ບໍ່ມີບາດແຜ, ບໍ່ມີຮ່ອງຮອຍການຕໍ່ສູ້, ການຖືກແຮ້ວ, ກັບດັກ, ອາວຸດປືນ ແລະ ອື່ນໆ;

- ຖ່າຍຮູບພາບ ຫຼື ຖ່າຍວິດີໂອ ທີ່ສະແດງເລກລະຫັດສະເພາະ ທີ່ຈັດສັນໃຫ້ຊິ້ນສ່ວນ ຫຼື ຊາກ ແຕ່ລະຊາກ ຫຼື ຊິ້ນສ່ວນ (ວິທີຖ່າຍຮູບພາບ ໃຫ້ປະຕິບັດຕາມ ຂໍ້ 2.2.2);
- ຫຼັກຖານທັງໝົດ ຕ້ອງຖືກບັນຈຸຫຸ້ມຫໍ່ ເປັນແຕ່ລະລາຍການ ໂດຍນຳໃຊ້ເຄື່ອງຫຸ້ມຫໍ່ທີ່ເໝາະສົມ;
- ໃນທຸກກໍລະນີ ທີ່ມີການເກັບກຳຕົວຢ່າງ ເພື່ອການວິເຄາະແຫຼ່ງກຳມະພັນ (DNA), ຕ້ອງສວມໃສ່ ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ແລະ ນຳໃຊ້ເຄື່ອງຫຸ້ມຫໍ່ທີ່ເໝາະສົມ ເພື່ອຫຼຸດຜ່ອນຄວາມ ສ່ຽງຈາກການຕິດເຊື້ອພະຍາດ;
- ສະຫຼາກຫຼັກຖານ ທີ່ຂຽນຕື່ມໃສ່ຢ່າງຄົບຖ້ວນ ແລະ ມີເລກລະຫັດສະເພາະ ຕ້ອງເອົາຄັດຕິດໃສ່ ເຄື່ອງຫຸ້ມ ຫໍ່ຢ່າງແໜ້ນ ໂດຍໃຊ້ສາຍເຊືອກ ຫຼື ເທັບຕິດ;
- ໃນກໍລະນີ ບໍ່ສາມາດເກັບກຳເອົາຊາກສັດໄດ້, ຕ້ອງຖ່າຍຮູບພາບ ຊາກສັດດັ່ງກ່າວ ຢ່າງຄົບຖ້ວນ ພ້ອມກັບ ເລກລະຫັດສະເພາະ ໃນເວລາກ່ອນ ແລະ ຫຼັງຈາກໄດ້ເກັບຕົວຢ່າງຮຽບຮ້ອຍແລ້ວ;
- ການທຳລາຍຊາກສັດ ຂະໜາດໃຫຍ່ ທຸກຄັ້ງ ຕ້ອງບັນທຶກດ້ວຍການຖ່າຍຮູບພາບ ຫຼື ຖ່າຍວິດີໂອ;
- ທຸກຕົວຢ່າງສັດປ່າ ທີ່ເໜົ່າເປື່ອຍໄວ ຕ້ອງເກັບກຳ ໂດຍນຳໃຊ້ເຄື່ອງຫຸ້ມຫໍ່ທີ່ເໝາະສົມທີ່ສຸດ;
- ຊິ້ນສ່ວນສັດປ່າ ຫຼື ຕົວຢ່າງຂອງສັດປ່າ ທີ່ໄດ້ຍຶດ ຕ້ອງນຳໄປເກັບໄວ້ຢູ່ຫ້ອງການ ຂອງ ກົມກວດກາປ່າໄມ້ ຫຼື ກອງກວດກາປ່າໄມ້ແຂວງ ແລະ ເກັບຮັກສາໄວ້ ສະຖານທີ່ເໝາະສົມ.

### 2) ຜະລິດຕະພັນສັດປ່າ

- ບຸກຄະລາກອນ ຕ້ອງສວມໃສ່ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນທີ່ເໝາະສົມ ສຳລັບເຫດການ ທີ່ເຂົ້າຮ່ວມ, ເຊັ່ນ: ລະດັບມາດຕະຖານຂັ້ນພື້ນຖານຂອງອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ແມ່ນຖົງມືກັນພະຍາດ 2 ຄູ່ ແລະ ຜ້າອັດປາກ-ດັງ;
- ການສວມໃສ່ອຸປະກອນປ້ອງກັນຕົນເອງຂັ້ນພື້ນຖານ ຕ້ອງ ໃສ່ຜ້າອັດປາກກ່ອນ ຫຼັງຈາກນັ້ນ ໃສ່ຖົງມືສອງ ຊັ້ນຊ້ອນກັນ ຮັບປະກັນບໍ່ໃຫ້ຖົງມືຈີກຂາດ. ຖ້າຂາດ, ຕ້ອງປ່ຽນໃສ່ຖົງມືໂຕໃໝ່;
- ຖ່າຍຮູບພາບ ຫຼື ຖ່າຍວິດີໂອ ຈຸດເກີດເຫດ ແລະ ບໍລິເວນອ້ອມຂ້າງ ກ່ອນລົງມືເກັບກຳຫຼັກຖານ (ວິທີ ຖ່າຍຮູບພາບ ໃຫ້ປະຕິບັດຕາມ ຂໍ້ 2.2.2);
- ແຍກປະເພດຜະລິດຕະພັນ ເຊັ່ນ: ສາຍຄໍ, ປອກແຂນ, ສາຍແຂນ, ແຫວນ, ກີ້ສາຍຄໍ, ຢາພື້ນເມືອງ ແລະ ອື່ນໆ;
- ຈັດສັນເລກລະຫັດສະເພາະໃຫ້ຫຼັກຖານແຕ່ລະອັນ ແລະ ບັນທຶກຂໍ້ມູນລະອຽດ (ເບິ່ງ ເອກະສານຊ້ອນ ທ້າຍ ງ ) ໂດຍນຳໃຊ້ວິທີການບັນທຶກ ໃນຂໍ້ 2.2.1;
- ຖ່າຍຮູບພາບ ຫຼື ຖ່າຍວິດີໂອເພີ່ມຕື່ມ ທີ່ສະແດງເລກລະຫັດສະເພາະ ທີ່ຈັດສັນໃຫ້ຜະລິດຕະພັນສັດປ່າ ແຕ່ລະລາຍການ (ວິທີຖ່າຍຮູບພາບ ໃຫ້ປະຕິບັດຕາມ ຂໍ້ 2.2.2);
- ຫຼັກຖານທັງໝົດ ຕ້ອງຖືກບັນຈຸຫຸ້ມຫໍ່ ເປັນແຕ່ລະລາຍການ ໂດຍນຳໃຊ້ເຄື່ອງຫຸ້ມຫໍ່ທີ່ເໝາະສົມ;
- ໃນທຸກກໍລະນີ ທີ່ມີການເກັບກຳຕົວຢ່າງ ເພື່ອການວິເຄາະແຫຼ່ງກຳມະພັນ (DNA), ຕ້ອງສວມໃສ່ ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ແລະ ນຳໃຊ້ເຄື່ອງຫຸ້ມຫໍ່ທີ່ເໝາະສົມ ເພື່ອຫຼຸດຜ່ອນຄວາມ ສ່ຽງຈາກການຕິດເຊື້ອພະຍາດ;
- ສະຫຼາກຫຼັກຖານທີ່ຂຽນຕື່ມໃສ່ຢ່າງຄົບຖ້ວນ ແລະ ມີເລກລະຫັດສະເພາະ ຕ້ອງເອົາຄັດຕິດໃສ່ເຄື່ອງຫຸ້ມຫໍ່ ຢ່າງແໜ້ນ ໂດຍໃຊ້ສາຍເຊືອກ ຫຼື ເທັບຕິດ;

- ຜະລິດຕະພັນສັດປ່າ ທີ່ຖືກຍຶດ ຊຶ່ງຕ້ອງໄດ້ຈຳແນກທາງດ້ານນິຕິວິທະຍາ ຕ້ອງຕິດຕໍ່ພົວພັນ ຫາ ກົມກວດກາປ່າໄມ້ ເພື່ອແຈ້ງໃຫ້ໜ່ວຍງານວິທະຍາສາດ ໄຊເຕັດ (CITES SA) ຮັບຊາບ ເຖິງຄວາມຈຳເປັນຕ້ອງເກັບກຳຕົວຢ່າງ ເພື່ອທຳການພິສູດໂດຍຜູ້ຊ່ຽວຊານສະເພາະດ້ານກຳມະພັນ (DNA).

### 2.4.3 ອາວຸດປືນ ແລະ ຫຼັກຖານປະເພດອື່ນໆ

#### ກ) ອາວຸດປືນ, ກະສອບລູກປືນ ແລະ ຫົວລູກປືນ ທີ່ເກັບໄດ້

- ບຸກຄະລາກອນ ຕ້ອງສວມໃສ່ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ທີ່ເໝາະສົມ ສຳລັບເຫດການທີ່ເຂົ້າຮ່ວມ, ເຊັ່ນ: ລະດັບມາດຕະຖານຂັ້ນພື້ນຖານຂອງອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ແມ່ນຖົງມືກັນພະຍາດ 2 ຄູ່ ແລະ ຜ້າອັດປາກ-ດັງ;
- ການສວມໃສ່ອຸປະກອນປ້ອງກັນຕົນເອງຂັ້ນພື້ນຖານ ຕ້ອງ ໃສ່ຜ້າອັດປາກກ່ອນ ຫຼັງຈາກນັ້ນ ໃສ່ຖົງມືສອງຊັ້ນຊ້ອນກັນ ຮັບປະກັນບໍ່ໃຫ້ຖົງມືຈີກຂາດ. ຖ້າຂາດ, ຕ້ອງປ່ຽນໃສ່ຖົງມືໂຕໃໝ່;
- ຖ່າຍຮູບພາບ ຫຼື ຖ່າຍວີດີໂອ ຈຸດເກີດເຫດ ແລະ ບໍລິເວນອ້ອມຂ້າງ ກ່ອນລົງມືເກັບກຳຫຼັກຖານ (ວິທີຖ່າຍຮູບພາບ ໃຫ້ປະຕິບັດຕາມ ຂໍ້ 2.2.2).
- ແຍກປະເພດຫຼັກຖານ ທີ່ກ່ຽວຂ້ອງກັບອາວຸດປືນ;
- ຈັດສັນເລກລະຫັດສະເພາະ ໃຫ້ຫຼັກຖານແຕ່ລະອັນ ແລະ ບັນທຶກຂໍ້ມູນລະອຽດ (ເບິ່ງ ເອກະສານຊ້ອນທ້າຍ ໆ ) ໂດຍນຳໃຊ້ວິທີການບັນທຶກ ໃນຂໍ້ 2.2.1;
- ຖ່າຍຮູບພາບ ຫຼື ຖ່າຍວີດີໂອເພີ່ມຕື່ມ ທີ່ສະແດງເລກລະຫັດສະເພາະ ທີ່ຈັດສັນໃຫ້ອາວຸດປືນແຕ່ລະລາຍການ (ວິທີຖ່າຍຮູບພາບ ໃຫ້ປະຕິບັດຕາມ ຂໍ້ 2.2.2);
- ຖ່າຍຮູບພາບ ແລະ ບັນທຶກຂໍ້ມູນພື້ນຖານຂອງອາວຸດປືນແຕ່ລະລາຍການ ດັ່ງນີ້:
  - ຍີ່ຫໍ້
  - ລຸ້ນ
  - ຜູ້ຜະລິດ
  - ເລກປະຈຳປືນ
  - ຂະໜາດຂອງປືນ/ຂະໜາດບັນຈຸລູກປືນ
  - ຕຳແໜ່ງຕົວລັອກນິລະໄພ (ເປີດ ຫຼື ປິດ)
  - ກະບອກລູກປືນ (ຖ້າມີ)
  - ລັກສະນະສະເພາະອື່ນໆ, ເຊັ່ນ: ເປ່ເພ, ປັບແຕ່ງ, ສ້າງຂຶ້ນໂດຍກະທັນຫັນ ແລະ ອື່ນໆ.
- ທຸກອາວຸດປືນ ຕ້ອງເຮັດໃຫ້ມີຄວາມປອດໄພ (ຖ້າສາມາດເຮັດໄດ້) ໂດຍເອົາລູກປືນອອກຈາກລຳກ້ອງ ແລະ ຖອດກະບອກລູກປືນອອກ;
- ທຸກອາວຸດປືນ ຕ້ອງຖືກຫຸ້ມຫໍ່ຢ່າງປອດໄພ ໃນເຄື່ອງຫຸ້ມຫໍ່ທີ່ແຂງ ຫຼື ຖົງໃສ່ຫຼັກຖານຂະໜາດໃຫຍ່ ໃນກໍລະນີບໍ່ມີກັບເຈ້ຍແຂງ;
- ທຸກອາວຸດປືນ ຕ້ອງຖືກຕິດສະຫຼາກບອກວ່າ ປອດໄພ ຫຼື ບໍ່ປອດໄພ;
- ລູກປືນທີ່ອອກຈາກລຳກ້ອງ ຕ້ອງຫຸ້ມຫໍ່ແຍກອອກຕ່າງຫາກ;
- ຫ້າມເອົາລູກປືນອອກຈາກບັ້ງປືນ ແລະ ຕ້ອງຫຸ້ມຫໍ່ບັ້ງປືນແຍກອອກຕ່າງຫາກ;
- ຫົວລູກປືນທີ່ເກັບໄດ້ ຕ້ອງບໍ່ຖືກຍົກຍ້າຍໂດຍນຳໃຊ້ເຄື່ອງມື ຫຼື ອຸປະກອນເປັນໂລຫະ ແລະ ມັນຕ້ອງຖືກຫຸ້ມຫໍ່ແຍກອອກຕ່າງຫາກ ໃນເຄື່ອງຫຸ້ມຫໍ່ທີ່ແຂງ. ເພື່ອປົກປັກຮັກສາຫຼັກຖານ ທີ່ມີລັກສະນະບອບບາງ,

ຫົວລູກປືນຕ້ອງມີສິ່ງຮອງ ເພື່ອຫຼີກເວັ້ນການເໜັງຕີງຢູ່ພາຍໃນເຄື່ອງຫຸ້ມຫໍ່. ອາດໃຊ້ແຖບຖົງຢາງ, ຖົງມືປ້ອງກັນພະຍາດ ຫຼື ເຈ້ຍສີນ້ຳຕານ. ບໍ່ຄວນໃຊ້ສຳລີ ຫໍ່ຫົວລູກປືນທີ່ເກັບໄດ້;

- ກະສອບລູກປືນທີ່ເກັບໄດ້ ຕ້ອງບໍ່ຖືກຍົກຍ້າຍໂດຍນຳໃຊ້ເຄື່ອງມື ຫຼື ອຸປະກອນເປັນໂລຫະ ແລະ ມັນຕ້ອງຖືກຫຸ້ມຫໍ່ໂດຍແຍກຕ່າງຫາກໃນເຄື່ອງຫຸ້ມຫໍ່ທີ່ແຂງ. ເພື່ອປົກປັກຮັກສາຫຼັກຖານທີ່ມີລັກສະນະບອບບາງ, ກະສອບລູກປືນຕ້ອງມີສິ່ງຮອງ ເພື່ອຫຼີກເວັ້ນການເໜັງຕີງຢູ່ພາຍໃນເຄື່ອງຫຸ້ມຫໍ່. ອາດໃຊ້ແຖບຖົງຢາງ, ຖົງມືປ້ອງກັນພະຍາດ ຫຼື ເຈ້ຍສີນ້ຳຕານ;
- ທຸກຫຼັກຖານທີ່ກ່ຽວຂ້ອງກັບອາວຸດປືນ ຕ້ອງຫຸ້ມຫໍ່ເປັນແຕ່ລະລາຍການ ໂດຍນຳໃຊ້ເຄື່ອງຫຸ້ມຫໍ່ທີ່ເໝາະສົມ;
- ໃນທຸກກໍລະນີ ທີ່ມີຄວາມຕ້ອງການເກັບກຳຕົວຢ່າງ ເພື່ອການວິເຄາະແຫຼ່ງກຳມະພັນ (DNA), ຕ້ອງສວມໃສ່ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ແລະ ນຳໃຊ້ເຄື່ອງຫຸ້ມຫໍ່ທີ່ເໝາະສົມ ເພື່ອຫຼຸດຜ່ອນຄວາມສ່ຽງຈາກການຕິດເຊື້ອພະຍາດ;
- ສະຫຼາກຫຼັກຖານ ທີ່ຂຽນຕື່ມໃສ່ຢ່າງຄົບຖ້ວນ ແລະ ມີເລກລະຫັດສະເພາະ ຕ້ອງເອົາຄັດຕິດໃສ່ເຄື່ອງຫຸ້ມຫໍ່ຢ່າງແໜ້ນ ໂດຍໃຊ້ສາຍເຊືອກ ຫຼື ເທັບຕິດ;
- ໃນກໍລະນີ ຕ້ອງມີການເກັບກຳລາຍນິ້ວມື ຫຼື ລາຍຝາມື, ທຸກອາວຸດປືນ ຕ້ອງຖືກບັນຈຸຫຸ້ມຫໍ່ຢ່າງປອດໄພ ແລະ ສົ່ງໄປຫາ ກົມກວດກາປ່າໄມ້ ເພື່ອແຈ້ງໃຫ້ ກົມນິຕິວິທະຍາ (ປກສ) ຫຼື ພາກສ່ວນກ່ຽວຂ້ອງອື່ນ ຊາບເຖິງຄວາມຈຳເປັນຕ້ອງເກັບກຳຕົວຢ່າງ ເພື່ອທຳການພິສູດໂດຍຜູ້ຊ່ຽວຊານ.

**໒) ຫຼັກຖານອື່ນໆ**

- ບຸກຄະລາກອນ ຕ້ອງສວມໃສ່ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນທີ່ເໝາະສົມ ສຳລັບເຫດການທີ່ເຂົ້າຮ່ວມ, ເຊັ່ນ: ລະດັບມາດຕະຖານຂັ້ນພື້ນຖານຂອງອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນແມ່ນຖົງມືກັນພະຍາດ 2 ຄູ່ ແລະ ຜ້າອັດປາກ-ດັງ;
- ການສວມໃສ່ອຸປະກອນປ້ອງກັນຕົນເອງຂັ້ນພື້ນຖານ ຕ້ອງ ໃສ່ຜ້າອັດປາກກ່ອນ ຫຼັງຈາກນັ້ນ ໃສ່ຖົງມືສອງຊັ້ນຊ້ອນກັນ ຮັບປະກັນບໍ່ໃຫ້ຖົງມືຈີກຂາດ. ຖ້າຂາດ ຕ້ອງປ່ຽນໃສ່ຖົງມືໂຕໃໝ່
- ຖ່າຍຮູບພາບ ຫຼື ຖ່າຍວິດີໂອ ຈຸດເກີດເຫດ ແລະ ບໍລິເວນອ້ອມຂ້າງ ກ່ອນລົງມືເກັບກຳຫຼັກຖານ (ວິທີຖ່າຍຮູບ ໃຫ້ປະຕິບັດຕາມ ຂໍ້ 2.2.2);
- ຈັດສັນເລກລະຫັດສະເພາະໃຫ້ຫຼັກຖານແຕ່ລະອັນ ແລະ ບັນທຶກຂໍ້ມູນລະອຽດ (ເບິ່ງ ເອກະສານຊ້ອນທ້າຍ ງ) ໂດຍນຳໃຊ້ວິທີການບັນທຶກ ໃນຂໍ້ 2.2.1;
- ແຍກປະເພດຫຼັກຖານຕ່າງໆອອກຈາກກັນ;
- ຖ່າຍຮູບພາບ ຫຼື ຖ່າຍວິດີໂອເພີ່ມຕື່ມ ທີ່ສະແດງເລກລະຫັດສະເພາະ ທີ່ຈັດສັນໃຫ້ຫຼັກຖານແຕ່ລະອັນ (ວິທີຖ່າຍຮູບພາບ ໃຫ້ປະຕິບັດຕາມ ຂໍ້ 2.2.2) ;
- ຫຼັກຖານທັງໝົດ ຕ້ອງຖືກບັນຈຸຫຸ້ມຫໍ່ ເປັນແຕ່ລະລາຍການ ໂດຍນຳໃຊ້ເຄື່ອງຫຸ້ມຫໍ່ທີ່ເໝາະສົມ;
- ໃນທຸກກໍລະນີ ທີ່ມີຄວາມຕ້ອງການເກັບກຳຕົວຢ່າງ ເພື່ອການວິເຄາະແຫຼ່ງກຳມະພັນ (DNA), ຕ້ອງສວມໃສ່ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ແລະ ນຳໃຊ້ເຄື່ອງຫຸ້ມຫໍ່ທີ່ເໝາະສົມ ເພື່ອຫຼຸດຜ່ອນຄວາມສ່ຽງຈາກການຕິດເຊື້ອພະຍາດ;

- ສະຫຼາກຫຼັກຖານທີ່ຂຽນຕື່ມໃສ່ຢ່າງຄົບຖ້ວນ ແລະ ມີເລກລະຫັດສະເພາະ ຕ້ອງເອົາຄັດຕິດໃສ່ເຄື່ອງຫຸ້ມຫໍ່ຢ່າງແໜ້ນ ໂດຍໃຊ້ສາຍເຊືອກ ຫຼື ເທັບຕິດ.

**ຄ) ຍານພາຫະນະ ແລະ ຫຼັກຖານທີ່ເຄື່ອນຍ້າຍບໍ່ໄດ້**

- ບຸກຄະລາກອນ ຕ້ອງສວມໃສ່ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ທີ່ເໝາະສົມ ສຳລັບເຫດການທີ່ເຂົ້າຮ່ວມ, ເຊັ່ນ: ລະດັບມາດຕະຖານຂັ້ນພື້ນຖານຂອງອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ແມ່ນຖົງມືກັນພະຍາດ 2 ຄູ່ ແລະ ຜ້າອັດປາກ-ດັງ;
- ການສວມໃສ່ອຸປະກອນປ້ອງກັນຕົນເອັງຂັ້ນພື້ນຖານ ຕ້ອງ ໃສ່ຜ້າອັດປາກກ່ອນ ຫຼັງຈາກນັ້ນ ໃສ່ຖົງມືສອງຊັ້ນຊ້ອນກັນ ຮັບປະກັນບໍ່ໃຫ້ຖົງມືຈີກຂາດ. ຖ້າຂາດ, ຕ້ອງປ່ຽນໃສ່ຖົງມືໂຕໃໝ່;
- ຖ່າຍຮູບພາບ ຫຼື ຖ່າຍວີດີໂອ ຈຸດເກີດເຫດ ແລະ ບໍລິເວນອ້ອມຂ້າງ ກ່ອນລົງມືເກັບກຳຫຼັກຖານ (ວິທີຖ່າຍຮູບພາບ ໃຫ້ປະຕິບັດຕາມ ຂໍ້ 2.2.2);
- ຈັດສັນເລກລະຫັດສະເພາະໃຫ້ຫຼັກຖານແຕ່ລະອັນ ແລະ ບັນທຶກຂໍ້ມູນລະອຽດ (ເບິ່ງ ເອກະສານຊ້ອນທ້າຍ ງ) ໂດຍນຳໃຊ້ວິທີການບັນທຶກ ໃນຂໍ້ 2.2.1;
- ຖ່າຍຮູບພາບ ຫຼື ຖ່າຍວີດີໂອເພີ່ມຕື່ມ ທີ່ສະແດງເລກລະຫັດສະເພາະ ທີ່ຈັດສັນໃຫ້ຫຼັກຖານແຕ່ລະລາຍການ (ວິທີຖ່າຍຮູບພາບ ໃຫ້ປະຕິບັດຕາມ ຂໍ້ 2.2.2);
- ສຳລັບຍານພາຫະນະທີ່ຖືກຍຶດ, ໃຫ້ດຳເນີນການຍຶດໂດຍເກັບມ້ຽນໄວ້ກັບທີ່ ຫຼື ນຳໄປເກັບມ້ຽນໄວ້ຢູ່ຫ້ອງການ ກົມກວດກາປ່າໄມ້ , ກອງກວດກາປ່າໄມ້ແຂວງ ແລະ ເກັບຮັກສາໄວ້ສະຖານທີ່ເໝາະສົມ;
- ເກັບຮັກສາສະຫຼາກຫຼັກຖານ ແລະ ຮູບພາບ ໄວ້ສະຖານທີ່ປອດໄພ.

**ງ) ຫຼັກຖານທາງດ້ານເອກະສານ**

ຫຼັກຖານທາງດ້ານເອກະສານ ຕ້ອງໄດ້ຮັບການປົກປັກຮັກສາຈາກຄວາມສ່ຽງ ໃນການທຳລາຍຂໍ້ຄວາມທີ່ຂຽນຊ້ອນທີ່ມີຢູ່ແລ້ວ ຫຼື ເຮັດໃຫ້ເອກະສານເສຍຫາຍ ໂດຍການຂຽນຕື່ມຂໍ້ຄວາມໃສ່ ຕາມຄວາມຕ້ອງການ. ຄວນນຳໃຊ້ເຄື່ອງຫຸ້ມຫໍ່ແຂງ ທຸກຄັ້ງຖ້າຫາກມີ.

- ບຸກຄະລາກອນ ຕ້ອງສວມໃສ່ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນທີ່ເໝາະສົມ ສຳລັບເຫດການທີ່ເຂົ້າຮ່ວມ, ເຊັ່ນ: ລະດັບມາດຕະຖານຂັ້ນພື້ນຖານຂອງອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນແມ່ນຖົງມືກັນພະຍາດ 2 ຄູ່ ແລະ ຜ້າອັດປາກ-ດັງ;
- ການສວມໃສ່ອຸປະກອນປ້ອງກັນຕົນເອງຂັ້ນພື້ນຖານ ຕ້ອງ ໃສ່ຜ້າອັດປາກກ່ອນ ຫຼັງຈາກນັ້ນ ໃສ່ຖົງມືສອງຊັ້ນຊ້ອນກັນ ຮັບປະກັນບໍ່ໃຫ້ຖົງມືຈີກຂາດ. ຖ້າຂາດ, ຕ້ອງປ່ຽນໃສ່ຖົງມືໂຕໃໝ່;
- ຖ່າຍຮູບພາບ ຫຼື ຖ່າຍວີດີໂອ ຈຸດເກີດເຫດ ແລະ ບໍລິເວນອ້ອມຂ້າງ ກ່ອນລົງມືເກັບກຳຫຼັກຖານ (ວິທີຖ່າຍຮູບພາບ ໃຫ້ປະຕິບັດຕາມ ຂໍ້ 2.2.2);
- ຈັດສັນເລກລະຫັດສະເພາະໃຫ້ຫຼັກຖານແຕ່ລະອັນ ແລະ ບັນທຶກຂໍ້ມູນລະອຽດ (ເບິ່ງ ເອກະສານຊ້ອນທ້າຍ ງ) ໂດຍນຳໃຊ້ວິທີການບັນທຶກ ໃນຂໍ້ 2.2.1;
- ຖ່າຍຮູບພາບ ຫຼື ຖ່າຍວີດີໂອເພີ່ມຕື່ມ ທີ່ສະແດງເລກລະຫັດສະເພາະ ທີ່ຈັດສັນໃຫ້ຫຼັກຖານທາງດ້ານເອກະ ສານແຕ່ລະລາຍການ (ວິທີຖ່າຍຮູບພາບ ໃຫ້ປະຕິບັດຕາມ ຂໍ້ 2.2);
- ຫຼັກຖານທາງດ້ານເອກະສານທັງໝົດ ຕ້ອງຖືກບັນຈຸຫຸ້ມຫໍ່ ເປັນແຕ່ລະລາຍການ ໂດຍນຳໃຊ້ເຄື່ອງຫຸ້ມຫໍ່ທີ່ເໝາະສົມ;

- ໃນທຸກກໍລະນີ ທີ່ມີການເກັບກຳຕົວຢ່າງ ເພື່ອການວິເຄາະແຫຼ່ງກຳມະພັນ (DNA), ຕ້ອງສວມໃສ່ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ແລະ ນຳໃຊ້ເຄື່ອງຫຸ້ມຫໍ່ທີ່ເໝາະສົມ ເພື່ອຫຼຸດຜ່ອນຄວາມສ່ຽງຈາກການຕິດເຊື້ອພະຍາດ;
- ສະຫຼາກຫຼັກຖານທີ່ຂຽນຕື່ມໃສ່ຢ່າງຄົບຖ້ວນ ແລະ ມີເລກລະຫັດສະເພາະ ຕ້ອງເອົາຄັດຕິດໃສ່ເຄື່ອງຫຸ້ມຫໍ່ຢ່າງແໜ້ນ ໂດຍໃຊ້ສາຍເຊືອກ ຫຼື ເທັບຕິດ.

## 2.5 ຕ່ອງໂສ້ການຄຸ້ມຄອງຫຼັກຖານ ແລະ ຂັ້ນຕອນການມອບ-ຮັບ

1) ຫຼັງຈາກທີມງານເກັບກຳຫຼັກຖານພາກສະໜາມ ໄດ້ນຳເອົາຫຼັກຖານທັງໝົດມອບໃຫ້ພະແນກ ຫຼື ໜ່ວຍງານສືບສວນ-ສອບສວນ ແລ້ວ, ພະແນກ ຫຼື ໜ່ວຍງານ ດັ່ງກ່າວ ຕ້ອງເກັບຮັກສາຫຼັກຖານໄວ້ບ່ອນທີ່ປອດໄພ ແລະ ສ້າງປຶ້ມບັນທຶກເກັບຮັກສາຫຼັກຖານ (ເບິ່ງເອກະສານຊ້ອນທ້າຍ ຈ );
2) ໃນກໍລະນີ ນຳໃຊ້ບ່ອນເກັບຮັກສາຊົ່ວຄາວ, ມີຄວາມຈຳເປັນຕ້ອງມີປຶ້ມບັນທຶກ ເກັບຮັກສາຫຼັກຖານ ທີ່ຖືກຕ້ອງຊັດເຈນ ເພື່ອບັນທຶກໄລຍະເວລາຂອງການເກັບຮັກສາຊົ່ວຄາວ ແລະ ການປ່ອຍອອກຈາກບ່ອນເກັບຮັກສາຊົ່ວຄາວ ໃນເວລາຕໍ່ມາ (ເບິ່ງເອກະສານຊ້ອນທ້າຍ ງ );
3) ເມື່ອຫຼັກຖານຖືກໂອນຈາກບຸກຄົນໜຶ່ງ ຫາອີກບຸກຄົນໜຶ່ງ, ຕ້ອງໄດ້ບັນທຶກການໂອນດັ່ງກ່າວ ໃສ່ສະຫຼາກຫຼັກຖານ ພາກບັນທຶກຄວາມຕໍ່ເນື່ອງ ແຕ່ລະອັນ ລະຫວ່າງ ເຈົ້າໜ້າທີ່ ຜູ້ມອບ ແລະ ຜູ້ຮັບ (ເບິ່ງເອກະສານຊ້ອນທ້າຍ ງ );
4) ຜູ້ຮັບ ຕ້ອງກວດກາສະພາບຂອງຫຼັກຖານໃຫ້ລະອຽດ ເພື່ອຮັບປະກັນວ່າມັນຢູ່ສະພາບເດີມ ທີ່ສາມາດຮັບເອົາໄດ້;
5) ໃນເວລາສົ່ງຫຼັກຖານປະກອບເຂົ້າສຳນວນຄະດີ ຕ້ອງໄດ້ປະຕິບັດຕາມຄຳສັ່ງຂອງໄອຍະການ;
6) ໃນກໍລະນີ ທີ່ຄະດີບໍ່ສາມາດແກ້ໄຂໄດ້ ເຊັ່ນ:
   - ບໍ່ຮູ້ຕົວຜູ້ກະທຳຜິດ;
   - ຮູ້ຕົວຜູ້ກະທຳຜິດ, ແຕ່ຜູ້ກ່ຽວບໍ່ຖືກຮ້ອງຟ້ອງ;
   - ໄດ້ຖືກພິຈາລະນາເຫັນວ່າ ບໍ່ມີຫຼັກຖານພຽງພໍ ໃນເວລານັ້ນ;
   - ຮູ້ຕົວຜູ້ກະທຳຜິດ ແລະ ຜູ້ກ່ຽວຖືກພິຈາລະນາຕັດສິນຄະດີໃຫ້ພົ້ນຂໍ້ກ່າວຫາ;
   - ຜູ້ກະທຳຜິດໄດ້ຖືກຕັດສິນລົງໂທດ, ແຕ່ຜູ້ກ່ຽວໄດ້ຂໍອຸທອນຄຳຕັດສິນ;

ຫຼັກຖານທັງໝົດ ຕ້ອງເກັບມ້ຽນໄວ້ຢູ່ບ່ອນເກັບຮັກສາທີ່ປອດໄພ ແລະ ສາມາດລະບຸໄດ້ ສຳລັບການຍື່ນສະເໜີຄືນ, ການກຳຈັດ ຫຼື ການທຳລາຍຖິ້ມ ໃນອະນາຄົດ.

**ເອກະສານຊ້ອນທ້າຍ ກ**

ເອກະສານສະແດງຕົວຢ່າງ ປຶດບັນທຶກຄຳໃຫ້ການ:

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ/ພະແນກ

ກົມ/ກອງ

**ປຶດບັນທຶກຄຳໃຫ້ການ**

- ອີງຕາມ ກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ ເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
- ອີງຕາມ ກົດໝາຍ ວ່າດ້ວຍສັດປ່າ (ສະບັບປັບປຸງ) ເລກທີ 42/ສພຊ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ກົດໝາຍ ວ່າດ້ວຍສັດນ້ຳ ແລະ ການປະມົງ ເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍອີງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ເລກທີ 0546/ກປ, ລົງວັນທີ 12 ພຶດສະພາ 2021.

ສະຖານທີ່............................ເວລາ.....................ຂອງວັນທີ....................ພະນັກງານສອບສວນ ທ່ານ................ ຕຳແໜ່ງ..........................ໜ້າທີ່ຮັບຜິດຊອບ.....................ສັງກັດຢູ່..........................ພ້ອມດ້ວຍຄະນະ ຈຳນວນ.......ທ່ານ ໜ້າທີ່ຮັບຜິດຊອບ..................................................ສັງກັດຢູ່...................................................................

ຊື່ ແລະ ນາມສະກຸນຜູ້ໃຫ້ການ ທ້າວ/ນາງ....................ອາຍຸ.......ປີ, ອາຊີບ...........ເຊື້ອຊາດ...........ສັນຊາດ......... ສາສະໜາ.............ລະດັບວັດທະນະທຳ...........ຖືບັດປະຈຳຕົວ..............ໜັງສືຜ່ານແດນ..............ເລກທີ........................ ລົງວັນທີ................ອອກໃຫ້ທີ່......................ບ້ານເກີດ.......................ເມືອງ......................ແຂວງ....................... ບ້ານຢູ່ປະຈຸບັນ..............................ເມືອງ...................................ແຂວງ..................................................

ຖືກຫາວ່າ:..................................................ຜ່ານມາເຄີຍຕ້ອງໂທດ...............ເທື່ອ, ໃນຂໍ້ຫາ........................

ການເຄື່ອນໄຫວແຕ່ອາຍຸ 8 ປີ ເຖິງປະຈຸບັນ......................................................................................

.....................................................................................................................................

**ສາຍພົວພັນຄອບຄົວ:**

\+ ຊື່ພໍ່ທ້າວ..................................................ອາຍຸ.........ປີ, ອາຊີບ........................................................ ປະຈຸບັນຢູ່ບ້ານ...............................ໜ່ວຍ.........ເມືອງ..........................ແຂວງ..........................................

\+ ຊື່ແມ່ນາງ..................................................ອາຍຸ.........ປີ, ອາຊີບ........................................................ ປະຈຸບັນຢູ່ບ້ານ...............................ໜ່ວຍ.........ເມືອງ..........................ແຂວງ..........................................

\+ ຊື່ຜົວ/ເມຍ................................................ອາຍຸ..........ປີ, ອາຊີບ........................................................ ປະຈຸບັນຢູ່ບ້ານ...............................ໜ່ວຍ.........ເມືອງ..........................ແຂວງ..........................................

\+ ອ້າຍ, ເອື້ອຍ, ນ້ອງຮ່ວມອຸທອນມີ........ຄົນ, ແຕ່ລະຄົນ ອາຍຸຈັກປີ ? , ເຮັດຫຍັງ ?, ຢູ່ໃສ ? ......................................

.....................................................................................................................................

**ເນື້ອໃນຄຳໃຫ້ການ:**

ຖາມ-ຕອບ.........................................................................................................................

.....................................................................................................................................

ການເອົາຄຳໃຫ້ການ ໄດ້ສິ້ນສຸດລົງໃນເວລາ................ໂມງ, ຕອນ..............ໃນວັນທີ....................................... ເຈົ້າໜ້າທີ່ບໍ່ໄດ້ໃຊ້ຄວາມຮຸນແຮງ, ການບັງຂັບ, ນາບຂູ່, ທຸບຕີ ຫຼື ນຳໃຊ້ມາດຕະການອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ໄດ້ອ່ານປຶດບັນທຶກ ສະບັບນີ້ ໃຫ້ຜູ້ເຂົ້າຮ່ວມຟັງ ແລ້ວເຫັນວ່າ ຖືກຕ້ອງ, ຈຶ່ງໄດ້ພ້ອມກັນລົງລາຍເຊັນ ແລະ ແປະໂປ້ມືໄວ້ ເພື່ອເປັນຫຼັກຖານ.

ທີ່ ......................., ວັນທີ......................

| **ພະນັກງານສອບສວນ** | **ຜູ້ເຂົ້າຮ່ວມ** | **ຜູ້ໃຫ້ການ** | **ຜູ້ບັນທຶກ** |
|---|---|---|---|
| ລາຍເຊັນ | ລາຍເຊັນ | ເຊັນ ແລະ ແປະໂປ້ມືຂວາ | ລາຍເຊັນ |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ/ພະແນກ

ກົມ/ກອງ

## ບົດບັນທຶກ

## ກວດກາພາກສະໜາມ

- ອີງຕາມ ກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ ເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
- ອີງຕາມ ກົດໝາຍ ວ່າດ້ວຍສັດປ່າ (ສະບັບປັບປຸງ) ເລກທີ 42/ສພຊ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ກົດໝາຍ ວ່າດ້ວຍສັດນໍ້າ ແລະ ການປະມົງ ເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງເຈົ້າໜ້າທີ່ປ່າໄມ້ ລົງເຄື່ອນໄຫວອຽກຢູ່ທ້ອງຖິ່ນ ເລກທີ........./......., ລົງວັນທີ..............

ໃນເວລາ...............ຂອງວັນທີ...............ຄະນະກວດກາ ໄດ້ພ້ອມກັນລົງກວດກາ ຢູ່ທີ່ບ້ານ...........................ເມືອງ ............................................ແຂວງ..................................................ເຊິ່ງເປັນຂອງ ບໍລິສັດ/ບຸກຄົນ ຊື່ນາມສະກຸນ............................ອາຍຸ..........ປີ, ປະຈຸບັນຢູ່ບ້ານ.................ເມືອງ.....................ແຂວງ.......................

**ຄະນະກວດກາ ຄັ້ງນີ້ ປະກອບດ້ວຍ:**

1) ທ່ານ................................................ຈາກພາກສ່ວນ.....................................................................
2) ທ່ານ................................................ຈາກພາກສ່ວນ.....................................................................
3) ທ່ານ................................................ຈາກພາກສ່ວນ.....................................................................

**ຜົນການກວດກາຕົວຈິງ:**

**I. ດ້ານເອກະສານ**

.......................................................................................................................................................

.......................................................................................................................................................

**II. ກວດກາວັດຖຸຕົວຈິງ**

.......................................................................................................................................................

.......................................................................................................................................................

**III. ສັງເກດຕີລາຄາ**

.......................................................................................................................................................

.......................................................................................................................................................

**IV. ມາດຕະການຈັດຕັ້ງປະຕິບັດ**

.......................................................................................................................................................

.......................................................................................................................................................

ມາເຖິງເວລາ..................ໂມງ ຂອງວັນທີ......................ການກວດກາໄດ້ສຳເລັດລົງດ້ວຍຜົນສຳເລັດເປັນຢ່າງດີ.

ດັ່ງນັ້ນ, ຈຶ່ງພ້ອມກັນສ້າງບົດບັນທຶກສະບັບນີ້ໄວ້ ເພື່ອເປັນຫຼັກຖານ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

ທີ່...................ວັນທີ...................

| | | |
|---|---|---|
| **ຢັ້ງຢືນຈາກ...................** | **ເຈົ້າຂອງ/ບໍລິສັດ** | **ຄະນະກວດກາ** |

**ເອກະສານຊ້ອນທ້າຍ ຄ**

ເອກະສານສະແດງຕົວຢ່າງ ວິທີການຊອກຄົ້ນຫຼັກຖານ:



ຊອກຄົ້ນໂດຍຍ່າງເປັນເສັ້ນຊື່ຮຽງກັນ



ຊອກຄົ້ນໂດຍຍ່າງເປັນເສັ້ນຕາໜ່າງ



ຊອກຄົ້ນໂດຍຍ່າງເປັນວົງວຽນ




ການຊອກຄົ້ນໂດຍຈັດເປັນເຂດ




ການຊອກຄົ້ນໂດຍຈັດເປັນເຂດ ແລະ ເປັນຕາໜ່າງ




ການຊອກຄົ້ນໂດຍຈັດເປັນຊັ້ນ




ການຊອກຄົ້ນໂດຍຈັດຊັ້ນ ແລະ ເປັນແຖວຊື່

**ເອກະສານຊ້ອນທ້າຍ ງ**

ຕົວຢ່າງສະແດງ ສະຫຼາກຫຼັກຖານທີ່ໄດ້ຂຽນປະກອບ ແລະ ພາກບັນທຶກຄວາມຕໍ່ເນື່ອງ:

ສະຫຼາກຫຼັກຖານຂອງກົມ/ກອງ

| ເລກລະຫັດສະເພາະຂອງຫຼັກຖານ | ເລກອ້າງອີງຂອງໄອຍະການ | ເລກອ້າງອີງຂອງສານ |
|---|---|---|
| *300323-BOS-A-01* | | |

ຊື່ຜູ້ຖືກສົງໃສ (ຖ້າຮູ້): *ທ. ອາລັນ ສອນທະວີ, ເກີດເມື່ອ 09/05/1989*

ລາຍລະອຽດຂອງກາງ: *ຜູ້ຖືກສົງໃສ ລັກລອບນຳເຂົ້ານໍ້າແຮດ*

ສະຖານທີ່ເກັບກຳ/ຍຶດ: *ບ້ານປ່າອ້ອຍ, ເມືອງຫ້ວຍຊາຍ, ແຂວງບໍ່ແກ້ວ*

ຍຶດ/ເກັບກຳ ໃນວັນທີ 30/03/2023 ເວລາ 14:45

ຍຶດ/ເກັບກຳໂດຍ : *Boulai Soukvilay* ລາຍເຊັນ :

**ດ້ານໜ້າ**

ພາກບັນທຶກຄວາມຕໍ່ເນື່ອງ: ຂຽນປະກອບໃສ່ໃນເວລາມີການ ມອບ-ຮັບຂອງກາງ

| ລ/ດ | ຊື່ ແລະ ນາມສະກຸນ | ວັນ, ເດືອນ, ປີ | ເວລາ | ລາຍເຊັນ |
|---|---|---|---|---|
| 1. | *ທ.ໄຊຍະພົງ ເຫຼືອຫຼາຍ* | *30/03/2023* | *16:00* | |
| 2. | *ທ.ບຸນໄຊ ທົງຄຳ* | *30/03/2023* | *18:00* | |
| 3. | *ທ.ພອນທະວີ ປະຖົມພົງ* | *10/04/2023* | *09:30* | |
| 4. | *ທ.ສອນສິນ ວົງນະຄອນ* | *16/04/2023* | *13:00* | |
| 5. | | | | |
| 6. | | | | |

**ດ້ານຫຼັງ**

## ເອກະສານຊ້ອນທ້າຍ ຈ

ເອກະສານສະແດງຕົວຢ່າງ ບົດບັນທຶກການກ່ຽວກັບຫຼັກຖານ:

| ເລກອ້າງອີງການເກັບຮັກສາຫຼັກຖານ |
|---|
| |

**ຫຼັກຖານເຂົ້າ**

| ເລກລະຫັດສະເພາະ | ອະທິບາຍຫຼັກຖານ | ພົບຢູ່ໃສ | ພົບເວລາໃດ | ພົບໂດຍ |
|---|---|---|---|---|
| | | | | |

| ວັນທີ ເຂົ້າ | ເວລາ ເຂົ້າ | ຊື່ເຈົ້າໜ້າທີ່ ຍື່ນສະເໜີຫຼັກຖານ | ລາຍເຊັນຊື່ເຈົ້າໜ້າທີ່ ຍື່ນສະເໜີຫຼັກຖານ | ຊື່ເຈົ້າໜ້າທີ່ຮັບຫຼັກຖານ | ລາຍເຊັນເຈົ້າໜ້າທີ່ ຮັບຫຼັກຖານ | ບົດບາດເຈົ້າໜ້າທີ່ ຮັບຫຼັກຖານ |
|---|---|---|---|---|---|---|
| | | | | | | |

**ການກວດກາ**

| ຫຼັກຖານມີສະຫຼາກ ຜ່ານ/ບໍ່ຜ່ານ | ສະຫຼາກຄວາມຕໍ່ເນື່ອງ ຖືກເຊັນ ຜ່ານ/ບໍ່ຜ່ານ | ຫຼັກຖານຖືກຫຸ້ມຫໍ່ ຜ່ານ/ບໍ່ຜ່ານ | ເຄື່ອງຫຸ້ມຫໍ່ຖືກອັດ ໜິດ ຜ່ານ/ບໍ່ຜ່ານ | ເຄື່ອງຫຸ້ມຫໍ່ຖືກເສຍ ຫາຍ ຜ່ານ/ບໍ່ຜ່ານ | ຫຼັກຖານເປັນອັນຕະລາຍ ຜ່ານ/ບໍ່ຜ່ານ | ຫຼັກຖານຊີວະພາບ ຜ່ານ/ບໍ່ຜ່ານ | ຂໍ້ແນະນໍາພິເສດ (ຖ້າມີ) |
|---|---|---|---|---|---|---|---|
| | | | | | | | |

**ການເກັບຮັກສາ**

| ບ່ອນເກັບຮັກສາ (ແຖວ/ຊັ້ນວາງ/ຄອນເທນເນີ/ຕູ້ເຢັນ/ຕູ້ເຢັນ/ຣາວວາງອາວຸດ | ຕົວລະບຸເພີ່ມຕື່ມ/ເລກອ້າງອີງ ເລກລໍາດັບ/ອາຊະຍາກໍາເລກທີ/ອື່ນໆ | ງາຊ້າງ/ນໍແຮດ ຂະໜາດ/ນໍ້າໜັກ (kg) | ຈໍານວນຜະລິດຕະພັນສັດປ່າ (ງານໍ/ເຂົາ/ເກັດ/ກະດູກ/ໜັງ) |
|---|---|---|---|
| | | | |

**ບັນທຶກການເຄື່ອນຍ້າຍຫຼັກຖານ**

| ວັນທີ ອອກ | ເວລາ ອອກ | ເຫດຜົນການເຄື່ອນຍ້າຍ | ປ່ອຍອອກໃຫ້ ຊື່ | ວັນທີ ເຂົ້າ | ເວລາ ເຂົ້າ | ຮັບໂດຍ ຊື່ | ຄໍາຖາມກວດກາ ມີ/ບໍ່ມີ |
|---|---|---|---|---|---|---|---|
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |

**ຫຼັກຖານອອກ**

| | | ການເອົາຫຼັກຖານອອກຈາກການຄຸ້ມຄອງຂອງ DNPW ຢ່າງຖາວອນ | | |
|---|---|---|---|---|
| ວັນທີ ອອກ | ເວລາ ອອກ | ເຫດຜົນຂອງການປ່ອຍອອກ ການຈໍາໜ່າຍຂອງສານ/ການທໍາລາຍ/ສົ່ງຄືນໃຫ້ເຈົ້າຂອງ/ໂອນໄປໄວ້ສາງ/ອື່ນໆ | ປ່ອຍອອກໂດຍ ຊື່ ແລະ ລາຍເຊັນ | ຮັບໂດຍ ຊື່ ແລະ ລາຍເຊັນ |
| | | | | |
| | | | | |

### ເອກະສານຊ້ອນທ້າຍ ສ

ເອກະສານສະແດງຕົວຢ່າງ ພາບສະເກດ

**ສະຖານທີ່ເກີດເຫດອາຊະຍາກຳສັດປ່າ: ພາບສະເກດ. ~~ມີມາດຕາສ່ວນ : ___~~/ບໍ່ມີມາດຕາສ່ວນ** **ເລກລະຫັດສະເພາະ:** 130623-GST-A-01
**ສະຖານທີ່: ແຄ້ມນັກລ່າ, ບໍ່ນ້ຳ 3, ປ່າສະຫງວນແຫ່ງຊາດ ດົງນາຕາດ. GPS:** 14.853120, 35.343999
**ແຕ້ມໂດຍ:** George S. Taylor **ວັນທີ** 13 ມິຖຸນາ 2023 ເວລາ 14:45 ໂມງ **ລົງລາຍເຊັນໂດຍ:** George S. Taylor




**ເຄື່ອງໝາຍ: 130623**

X1: ຮອຍເກີບ VFC-A-01
X2: ຮອຍເກີບ VFC-A-02
X3: ຮອຍເກີບ VFC-A-03
X4: ຮອຍເກີບ VFC-A-04
X5: 12g ກະສອບລູກປືນ EFL-A-01
X6: 12g ກະສອບລູກປືນ EFL-A-02
X7: ຄາບເລືອດ EFL-A-03
X8: ຄາບເລືອດ EFL-A-04
X9: ມີດ VFC-A-05
X10: ກົດປາສູບ VFC-A-06
X11: ໝວກແກບ VFC-A-07
X12: ໂທລະສັບໂນເກຍ VFC-A-08